# ເບິ່ງລວມ ບັນດາຊົນເຜົ່າ ທີ່ຫຼວງນ້ຳທາ

♦ ມີຫຼາຍກວ່າຊາວຊົນເຜົ່າ ອາໃສຢູ່ແຂວງຫຼວງນ້ຳທາ. ພວກເຂົາເຈົ້າສັງກັດໃນ ສີ່ກຸ່ມຕະກູນພາສາ ຕົ້ນຕໍ : 1). ໂອສໂຕຣ-ອາຊີ, 2). ໄຕກະໄດ, 3). ຕິເບ-ພະມ້າ ແລະ 4). ມຽນ-ມົ້ງ.

♦ ໃນທົ່ວ ສປປ.ລາວ, ພົນລະເມືອງສ່ວນໃຫຍ່ ສັງກັດໃນກຸ່ມພາສາໄຕກະໄດ. ຢ່າງໃດກໍດີ,ຢູ່ຫຼວງນ້ຳ ທາ, ລາວລຸ່ມ ແລະ ຊົນເຜົ່າອື່ນໆ ທີ່ປາກເວົ້າພາສາໄຕບໍ່ເປັນສ່ວນໃຫຍ່ຂອງພົນລະເມືອງ.

♦ ຢູ່ແຂວງຫຼວງນ້ຳທາ, ພວກທີ່ສັງກັດໃນກຸ່ມພາສາໂອສໂຕຣ-ເອຊີ ຮວມມີຊົນເຜົ່າລະແມດ, ສາມ ຕາວ ແລະ ຂະມຸສາຍຕ່າງໆ. ຊົນເຜົ່າຂະມຸ ເປັນສ່ວນໃຫຍ່ຂອງພົນລະເມືອງ.

♦ ຕົວແທນຂອງຕະກຸນພາສາໄຕ-ກະໄດ ຮວມມີ ລາວ, ໄຕຢວນ (ໄຕ່ກະລອມ), ໄຕລື້, ໄຕເໜືອ, ໄຕດຳ, ໄຕແດງ, ໄຕຂາວ ແລະ ຢັ້ງ.

♦ ໃນກຸ່ມຕະກຸນພາສາຕິເບ-ພະມ້າ ຮວມມີບັນດາຊົນເຜົ່າຜູ້ນ້ອຍ, ລະຫູ (ຫຼື ກຸ່ຍ), ສີລາ, ພັນນາ ແລະ ອາຄ່າ ສາຍຕ່າງໆ. ຊົນເຜົ່າອາຄ່າ ເປັນສ່ວນໃຫຍ່ຂອງພົນລະເມືອງ ໃນສັງກັດເຄົ້າຕິເບ-ພະມ້າ.

♦ ຕົວແທນຂອງກຸ່ມມຽນ-ມົ້ງ ຮ່ວມມີ ຢ້າວ, ລານແຕນ (ສາຍໜຶ່ງຂອງຢ້າວ) ແລະ ມົ້ງສາຍຕ່າງໆ.

## ເບິ່ງລວມ : ບັນດາກຸ່ມໄຕ

ບັນດາເຜົ່າໄຕ ເປັນກຸ່ມທີ່ພົ້ນເດັ່ນໃນເຂດທົ່ງພຽງຕ່າງໆ ຂອງແຂວງຫຼວງນ້ຳທາ. ພວກເຂົາເຈົ້າຮວມມີ ລາວ, ໄຕຢວນ, ໄຕລື້, ໄຕເໜືອ, ໄຕດຳ, ໄຕແດງ, ໄຕຂາວ ແລະ ຢັ້ງ. ເຂົາເຈົ້າປາກເວົ້າພາສາທີ່ຄ້າຍ ຄືກັນທີ່ສຸດ ແລະ ມີຄວາມແຕກຕ່າງຜິດພ້ຽນກັນທາງພາສາດ້ານເລັກໆນ້ອຍໆເທົ່ານັ້ນ. ເຂົ້າເຈົ້າອາໄສ ຢູຕາມເຂດຮາບພຽງ ແລະ ໃກ້ຫ້ວຍນ້ຳລຳທານເປັນສ່ວນຫຼາຍ; ມີພຽງບາງຊົນເຜົ່າເທົ່ານົ້ນ ເຄີຍມີມູນ ເຊື້ອມັກຢູ່ຕາມຮ່ອມພູ ເຂດພູດອຍ, ເຊັ່ນ: ໄຕດຳ ແລະ ໄຕແດງເປັນຕົ້ນ.

ສ່ວນໃຫຍ່ຂອງພວກປາກພາສາໄຕ ເປັນຊາວພຸດນິກາຍມະຫາຍານແບບໜຶ່ງ, ຊຶ່ງປົກກະຕິມັກເຊື່ອຖື ໄປຄຽງຄູ່ກັບຮີດຖືຜີ. ຢ່າງໃດກໍດີ, ມີບາງຊົນເຜົ່າໄຕ ບໍ່ເຊື່ອຖືສາສະໜາພຸດ ຫາກເຊື່ອຖືຜີເທົ່ານັ້ນ, ເຊັ່ນ: ໄຕດຳ, ໄຕແດງ, ໄຕຂາວ ແລະ ຢັ້ງ.

ທຸກກຸ່ມເຜົ່າໄຕ ເຮັດນາປູກເຂົ້າດ້ວຍນ້ຳຊົນລະປະທານ ແລະ ໃຊ້ຄວາຍລາກແກ່ໄຖຄາດ. ເຂົາເຈົ້າຍັງ ເຮັດສວນຄົວໃກ້ເຮືອນ ທີ່ໃຫ້ຜັກ ແລະ ຫອມນາໆຊະນິດ ສຳລັບແຕ່ງອາຫານການກິນຂອງຕົນ. ບາງເຜົ່າ ນອກຈາກການເຮັດນາ ຍັງພາກັນເຮັດໄຮ່ຕື່ມ. ກຸ່ມຕະກູນໄຕທັງໝົດໃນ ສປປ.ລາວ ມັກປູກ ແລະ ກິນເຂົ້າໜຽວ.

ພວກເຜົ່າໄຕທັງຫຼາຍ ມີການຈັດຕັ້ງດ້ານການເມືອງ-ການປົກຄອງອັນສະຫຼັບສັບຊ້ອນ ແລະ ພົ້ນເດັ່ນ - ເອີ້ນກັນວ່າ ເມືອງ. ຄຳວ່າເມືອງໃນຄາວກ່ອນ ໝາຍເຖິງອານາຈັກ ຫຼື ລາຊະອານາຈັກນ້ອຍແບບໜຶ່ງ ຊຶ່ງອານາເຂດດິນແດນ ມັກຖືກຈຳກັດໃຫ້ຢູ່ໃນຂອບເຂດຂອງຫວ່າງພູໃຫຍ່ໜຶ່ງໆ ແລະ ຢູ່ໃຕ້ການປົກ ການແບບສືບເຊື້ອສາຍລາຍລ່ອງຂອງຊັ້ນເຈົ້າກົກເຈົ້າເຫຼົ່າປະຈຳທ້ອງຖິ່ນ. ພວກນີ້ເກັບສ່ວຍຈາກບັນ ດາເຜົ່າຊົນໃນອານາເຂດດິນແດນຂອງຕົນ.

ເຜົ່າໄຕທຳອິດ ທີ່ໄດ້ເຂົ້າມາຕັ້ງຫຼັກປັກແຫຼ່ງກ່ອນໝູ່ຢູ່ເຂດທົ່ງພຽງຫຼວງນ້ຳທາ ແມ່ນໄຕຢວນ (ໃນທ້ອງ ຖິ່ນ ເອີ້ນວ່າ ໄຕກະລອມ ). ແຕ່ເດີມອອກມາຈາກຊຽງແສນ ທີ່ເປັນສ່ວນໜຶ່ງຂອງລາຊະອານາຈັກລ້ານ ນາ ຢູ່ທາງພາກເໜືອຂອງປະເທດໄທໃນປາງກ່ອນ - ພວກເຂົາເຈົ້າເຄື່ອນຍ້າຍເຂົ້າມາຢູ່ທົ່ງພຽງນ້ຳທາ ໃນກາງສະຕະວັດທີສິບຫົກ. ເວລານັ້ນ, ທົ່ງພຽງນີ້ ເປັນດິນແດນຕອນເໜືອສຸດຂອງລາຊະອານາຈັກ ລ້ານຊ້າງ ທີ່ມີຫຼວງພະບາງ ເປັນນະຄອນຫຼວງໃນຄາວນັ້ນ. ຢູ່ທີ່ນັ້ນພວກເຂົາເຈົ້າໄດ້ສ້າງຕັ້ງອານາຈັກ ຫຼວງຫົວທາຂຶ້ນມາ. ໄຕຢວນ ຖືສາສະໜາພຸດມະຫານິກາຍ ໄປຄຽງຄູ່ກັບການຖືຜີ ທີ່ມີມາກ່ອນການ ເຂົ້າມາຂອງພຸດທະສາສະໜາ.

ພວກໄຕລື້ ດຽວນີ້ເຕົ້າໂຮມກັນຢູ່ທົ່ງພຽງເມືອງສິງ ຊຶ່ງຄັ້ງໜຶ່ງໃນປາງກ່ອນ ເຄີຍຕົກເປັນສ່ວນໜຶ່ງຂອງ ລາຊະອານາຈັກສິບສອງພັນນາ, ປັດຈຸບັນຂຶ້ນກັບ ມົນທົນປົກຄອງຕົນເອງຂອງເຜົ່າໄຕສິບ

ສອງພັນນາ, ຢູ່ທາງພາກໃຕ້ຂອງຢຸນນານ,ຈີນ.ແຕ່ກົກເຄົ້າເດີມດາ, ພວກເຂົາເຈົ້າຢູ່ກະຈັດກະຈາຍຕາມບັນດາເມືອງ ນັບແຕ່ວຽງພູຄາ, ເມືອງລອງ ໄປຈົນເຖິງເມືອງສິງ. ຊາວໄຕລື້ກໍຖືສາສະໜາພຸດ ແຕ່ຍັງຄົງຮັກສາມູນ ເຊື້ອນັບຖືຜີໄວ້ ຢ່າງສະໜິດແໜ້ນ.

ຢ່າງໃດກໍດີ, ໄຕດຳ, ໄຕແດງ, ໄຕຂາວ ແລະ ຢັ້ງ ແມ່ນໄຕສາຍໜຶ່ງທີ່ມີຄວາມແຕກຕ່າງຈາກໄຕອື່ນໆ ໃນບາງຢ່າງ. ສາມເຜົ່າທຳອິດ ແຕ່ເດີມມາເຄີຍຢູ່ອາໃສໃນດິນແດນຂອງດຽນບຽນຟູ ແຫ່ງພາກເໜືອຂອງຫວຽດນາມ ແລະ ເລືອກຍົກຍ້າຍມາທາງກ້ຳຕາເວັນຕົກເທົ່ານັ້ນ ເພື່ອເຂົ້າມາຕັ້ງຖິ່ນຖານໃໝ່ໃນ ເຂດນີ້ ຂອງ ສປປ.ລາວ ໃນສະຕະວັດທີ 19. ເຖິງວ່າພວກເຂົາເຈົ້າກໍ່ຮວມກັນສ້າງເມືອງທີ່ເຂັ້ມແຂງຄື ກັນ, ແຕ່ກໍບໍ່ເຄີຍຖືສາສະໜາພຸດຈັກເທື່ອ. ພວກເຂົາເຈົ້ານັບຖືສາສະໜາຜີຕ່າງໆ ຊຶ່ງຮວມມີຜີເມືອງ, ຜີບ້ານ ແລະ ຜີເຮືອນ.

ພວກແມ່ຍິງໄຕທັງຫຼາຍພາກັນນຸ່ງສິ້ນ. ຄວາມແຕກຕ່າງກັນດ້ານເຜົ່າພັນ ອາດເບິ່ງເຫັນໄດ້ຢູ່ໃນການ ອອກແບບ, ການຕ່ຳທໍ ແລະ ການຕັດຫຍິບເຄື່ອງນຸ່ງຖືມູນເຊື້ອຂອງພວກເຂົາເຈົ້າ. ບາງຊົນເຜົ່າໄຕ ທຳ ການປູກມອນລ້ຽງມ້ອນ ແລະ ຕ່ຳຜ້າໄໝ, ບາງເຜົ່າຕ່ຳຜ້າຝ້າຍ.

ເຮືອນຢູ່ແບບມູນເຊື້ອດັ້ງເດີມຂອງທຸກຊົນເຜົ່າໄຕ ເປັນເຮືອນຮ້ານສູງ, ທາງໃນຂອງເຮືອນ ຕາມທຳມະ ດາແລ້ວ ເຄິ່ງໜຶ່ງທາງຍາວຈະແບ່ງໄວ້ເປັນບ່ອນນອນ; ໃນນັ້ນ ສ່ວນໜຶ່ງຖືກແອ້ມຂັ້ນເປັນຫ້ອງ, ເຫຼືອນັ້ນໃຊ້ມຸ້ງກາງຕໍ່ໆກັນໄປ; ອີກເຄິ່ງໜຶ່ງກວ້າງຂວາງ ຈຶ່ງໄວ້ເປັນບ່ອນພັກເຊົາ ສຳລັບຄອບຄົວ ແລະຮັບ ແຂກ ໂດຍມີຈຸດໃຈກາງຢູ່ຫ້ອງແຈດ້ານໃນ. ຢູ່ທາງໜ້າຂອງເຮືອນໃຫຍ່ຈະມີເຊຍ ຫຼື ລະບຽບອັນກວ້າງ ເພື່ອເປັນສະຖານທີ່ສາທາລະນະອີກບ່ອນໜຶ່ງ ເພື່ອໃຫ້ຄອບຄົວກັບເພື່ອນມິດ ແລະ ຍາດພີ່ນ້ອງໄດ້ພັກຜ່ອນຢ່ອນອາລົມ.

## ໂສມໜ້າ : ຂະມຸ

ຊົນເຜົ່າຂະມຸ ສັງກັດໃນກຸ່ມເຜົ່າມອນ-ຂະແມ ຂອງຕະກູນພາສາໂອສໂຕຣ-ອາຊີ. ບັນດາສະມາຊິກຂອງຕະກູນພາສານີ້ ຖືກເຊື່ອຖືວ່າເປັນປະຊາກອນທຳອິດທຳອໍ່ ທີ່ເຂົ້າມາຢູ່ໃນພາກພື້ນອາຊີອາຄະເນ. ພາກໃຕ້ ສປປ.ລາວ ທຸກມື້ນີ້ ເປັນແຫຼ່ງເຕົ້າໂຮມໃຫຍ່ກວ່າໝູ່ໝົດ ຂອງບັນດາຊົນເຜົ່າທີ່ປາກເວົ້າໃນ ຕະກູນພາສາໂອສໂຕຣ-ອາຊີ. ສ່ວນຊົນເຜົ່າຂະມຸ ຊໍ້າພັດເຕົ້າໂຮມກັນຢູ່ທາງເໜືອ ແລະ ກວມເຖິງ 25% ຂອງພົນລະເມືອງແຂວງຫຼວງນໍ້າທາ.

ຊົນເຜົ່າຂະມຸໃນແຂວງຫຼວງນໍ້າທາ ຮວມມີ 5 ແຊກດ້ວຍກັນ, ກ່າວຄື: ຂະມຸລື້, ຂະມຸເກີຣແຄວນ, ຂະມຸ ອູ, ຂະມຸຍວນ ແລະ ຂະມຸຣອັກ. ທັງໝົດຮວມມີວັດທະນະທຳທີ່ຄ້າຍຄືກັນ ແລະ ແຊກຊ້ອນເກາະກ່າຍ ກັນ, ມີພຽງຄວາມແຕກຕ່າງກັນເລັກໆນ້ອຍໆ ໃນການປາກເວົ້າ ແລະ ການນຸ່ງຖືເທົ່ານັ້ນ ທີ່ບອກເຖິງ ຄວາມຕ່າງກັນ.

ຄົນລາວ ຖືຄົນຂະມຸຄືອ້າຍກົກຂອງຕົນ. ທັງນີ້ກໍເພາະວ່າຊາວຂະມຸ ເປັນພວກທຳອິດທີ່ໄດ້ມາຢູ່ໃນດິນແດນນີ້ກ່ອນ. ພື້ນແຜ່ນເທບນິຍາຍດັ້ງເດີມອັນໜຶ່ງຂອງຂະມຸ ໄດ້ກ່າວເຖິງການພົວພັນອ້າຍກົກ-ນ້ອງຊາຍຫຼ້າ ອັນນີ້. ອີງຕາມພື້ນຕຳນານ, ທັງຂະມຸ ແລະ ລາວ ພາກັນອອກມາຈາກໝາກນໍ້າເຕົ້າປຸງ. ຫຼັງ ຈາກໃຊ້ເຫຼັກຊີແດງ ຊີໝາກນໍ້າເຕົ້າໃຫ້ເປັນຮູພໍຫຼົມຕົວແລ້ວ, ຊາວຂະມຸໄດ້ໝົ້ນອອກມາກ່ອນຈຶ່ງມີໜ້າຕາຜິວພັນດຳແຫຼ້ຍ້ອນຖືກຂີ້ໝົ້ນໝໍ້. ສ່ວນພວກລາວທີ່ອອກມາຕາມຫຼັງ ຊໍ້າພັດມີຜິວໜັງທີ່ເສາະໃສກວ່າ, ຂາວກວ່າ, ແຕ່ຕ້ອງເປັນນ້ອງຊາຍຫຼ້າ.

## ການຕັ້ງຖິ່ນຖານ ແລະ ເຮືອນຢູ່.

ແຕ່ໃດໆມາ, ຊາວຂະມຸ ມັກຕັ້ງພູມລຳເນົາຢູ່ຕາມສັນພູ ຫຼື ຕີນໂນນພູ, ເຖິງແມ່ນວ່າໃນທຸກມື້ນີ້ຫຼາຍໆບ້ານໄດ້ຫຍັບຍ້າຍມາຢູ່ລຽບແຄມທາງລົດແລ້ວກໍ່ຕາມ. ເຮືອນຂະມຸດັ້ງເດີມ ຕັ້ງຢູ່ຈຸ້ມກັນ ແລະ ມັກຕັ້ງ ບ້ານຖາວອນ, ນ້ອຍໜັກນ້ອຍໜາຈຶ່ງຍ້າຍບ້ານ. ບ້ານຂອງພວກເຂົາເຈົ້າໃນຄາວກ່ອນ ແລະ ດຽວນີ້ ກໍ ຍັງມີໃຫ້ເຫັນຢູ່ຫຼາຍໆບ່ອນ, ມີຈຸດແຕກຕ່າງຢູ່ບ່ອນເລົ້າເຂົ້າສູງໆຂອງຊາວບ້ານ, ຖືກປູກສ້າງລຽງລາຍ ກັນເປັນໝູ່ຢູ່ນອກບ້ານ.

ເຮືອນມູນເຊື້ອຂອງຊາວຂະມຸ ຄ້າຍຄືກັນກັບເຮືອນຊາວລາວຢູ່ບ່ອນເປັນເຮືອນຮ້ານຕັ້ງເສົາເໝືອນກັນ. ການເຮັດເຮືອນສ່ວນຫຼາຍຈະນຳໃຊ້ໄມ້ປ່ອງ ຍົກເວັ້ນກົກເສົາ, ຂາງ, ຂື່, ຕົງ ທີ່ເປັນໄມ້ຈິງ. ຫຼັງຄາໂດຍ ທົ່ວໄປແລ້ວແມ່ນມຸງດ້ວຍຫຍ້າຄາ. ເຄື່ອງໃຊ້ສອຍປະເພດໂຕະຕັ່ງແມ່ນງ່າຍດາຍ. ຮ້ານຜີເຮືອນ ເປັນ ສ່ວນປະກອບທີ່ສຳຄັນຢູ່ພາຍໃນເຮືອນ. ຂະໜາດຂອງເຮືອນຂະມຸ ແລະ ບໍລິມາດໄມ້ທີ່ໃຊ້ເພື່ອເຮັດ ເຮືອນ ຂຶ້ນກັບຖານະເສດຖະກິດການເງິນຂອງແຕ່ລະຄອບຄົວ. ຈຸດພິເສດອັນໜຶ່ງ ທີ່ເຮັດໃຫ້ບ້ານຂະມຸ ຕ່າງຈາກບ້ານລາວ ແມ່ນທຸກໆບ້ານຈະມີ

ເຮືອນສ່ວນລວມຫຼັງໜຶ່ງ ຊຶ່ງໃຊ້ເປັນບ່ອນໃຫ້ພວກຜູ້ຊາຍມາ ປະຊຸມປຶກສາຫາລືກັນ ຫຼື ເພື່ອເຮັດວຽກໃດໜຶ່ງຮ່ວມກັນ.

ເສດຖະກິດ

ຕັ້ງແຕ່ໃດໆມາ, ຊາວຂະມຸ ຖາງປ່າເຮັດໄຮ່ ແລະ ລ້ຽງສັດ. ເຂົາເຈົ້າກິນເຂົ້າໜຽວທີ່ເປັນພືດຜົນລະປູກ ຕົ້ນຕໍຂອງຕົນ. ພວກເຂົາເຈົ້າຍັງປູກສາລີ, ກ້ວຍ ແລະ ຜັກຕ່າງໆທີ່ນັກກິນ. ຊາວຂະມຸເກັ່ງດ້ານການລ່າສັດ, ໃສ່ແຮ້ວ, ຫາປາ ແລະ ເກັບເຄື່ອງປ່າຂອງດົງ, ສາມາດຫາສະບຽງອາຫານເພີ້ມເຕີມຈາກພູຜາປ່າໄມ້ມາລ້ຽງຊີບໄດ້ສະບາຍໆ ນັບເປັນສະຕະວັດມາແລ້ວ. ທີ່ແຂວງຫຼວງນ້ຳທາ, ຊາວຂະມຸຈຳນວນຫຼາຍ ໄດ້ຍ້າຍຈາກເຂດພູລິງມາຕັ້ງພູມລຳເນົາຢູ່ບ່ອນດິນຮາບພຽງເພື່ອສັບສ່າວນາ ແລະ ເຮັດນາປູກ ເຂົ້າຄືກັນກັບເຜົ່າໄຕທັງຫຼາຍ.

ຄວາຍເປັນສັນຍາລັກແຫ່ງຄວາມອຸດົມຮັ່ງມີ ແລະ ມັກຖືກຂ້າສະເພາະເພື່ອລ້ຽງຜີ. ສັນຍາລັກແຫ່ງຄວາມອຸດົມສົມບູນອີກອັນໜຶ່ງຂອງເຜົ່າຂະມຸ ແມ່ນຄ້ອງບັ້ງທອງສຳລິດ. ເຄື່ອງຫັດຖະກຳນີ້ເປັນຜະລິດຕະພັນອັນໂດດເດັ່ນ, ມີປະວັດສາດຍາວນານກວ່າ 2000 ປີ ໃນແຖບອາຊີອາຄະເນ. ຄ້ອງບັ້ງທອງສຳ ລິດ ທີ່ພົບເຫັນໃນບ້ານຂອງເຜົ່າຂະມຸ ເປັນຊັບສົມບັດສືບທອດຕໍ່ໆກັນມາ ແລະ ໜ້າຈະມີອາຍຸຫຼາຍ ກວ່າ 200 ປີ.

ຊາວຂະມຸ ຕ່ຳຜ້າແພດ້ວຍປໍປ່ານ ແລະຝ້າຍ ແລະ ມີຊື່ສຽງໃນການສານກະພາ ແລະ ກະຊ້າ. ພວກຜູ້ ຊາຍເປັນຜູ້ຜະລິດເຄື່ອງຈັກສານເຫຼົ່ານີ້ ໃນລະດູຝົນ ເພື່ອໃຊ້ສອຍໃນຄອບຄົວ ແລະ ເພື່ອແລກປ່ຽນ.

**ສາສະໜາ**

ຢ່າງນ້ອຍ ກ່ອນການປັບຕົວເຂົ້າຫາວັດທະນະທຳລາວລຸ່ມ, ຊາວຂະມຸບໍ່ແມ່ນຊາວພຸດ. ພວກເຂົາເຈົ້ານັບຖືສາລະພັດຜີ, ນັບແຕ່ຜີປູ່ຍ່າຕາຍາຍ ໄປເຖິງຜີບ້ານ ຕະຫຼອດຮອດຜີປ່າຜີພູຕ່າງໆ. ຄົນລາວເຊື່ອວ່າ ຄົນຂະມຸມີອຳນາດອິດທິລິດຕໍ່ພວກຜີໃນເຂດນັ້ນ, ພິເສດແມ່ນທີ່ຫຼວງພະບາງ. ຢູ່ທີ່ນີ້, ພວກກະສັດ ຊຶ່ງແມ່ນຈຸ້ມເຈື້ອໜຶ່ງຂອງຂະມຸ-ບໍ່ມີຢູ່ຫຼວງນ້ຳທາ, ໄດ້ຖືກເຊີນເຂົ້າມາໃນລາຊະວັງໃນຖາ ນະເປັນຊ່ຽວຊານດ້ານພິທີກຳຕາມຮີດຄອງຕ່າງໆ. ພວກເຂົາເຈົ້າໄດ້ເຂົ້າຮ່ວມພິທີກຳປະຈຳປີຂອງພະ ລາຊະວັງ ແລະ ແມ່ນພວກນີ້ເອງ ທີ່ໄດ້ສູດໄຊຍະມົງຄຸນໃຫ້ແກ່ພະລາຊະວັງຫຼວງພະບາງ ພາຍຫຼັງສຳ ເລັດການກໍ່ສ້າງ.

ການເສັນເຢົາ ເຖິງວ່າບໍ່ຄ່ອຍເຫັນໃນທຸກມື້ນີ້, ແຕ່ກໍຍັງຄົງເຮັດຢູ່ໃນບາງຄອບຄົວ. ເຜົ່າຂະມຸ ຍັງມີມູນ ເຊື້ອຖືເຈົ້າເຂົ້າຊິງ ຊຶ່ງຜູ້ຖືຜີເຈົ້າສາມາດເຮັດໃຫ້ຜີເຈົ້າເຂົ້າທຽມຕົນເອງ ຫຼື ຜູ້ອື່ນໄດ້.

**ຄອບຄົວ ແລະ ການແຕ່ງດອງ**

ເຜົ່າຂະມຸ ເປັນເຜົ່າທີ່ສືບເຊື້ອສາຍຂອງຝ່າຍພໍ່ ແລະ ຢູ່ກັນເປັນກຸ່ມແຊງ ໂດຍອີງຕາມໂຕສັດທີ່ຖືເປັນ ສັດສັນຍາລັກປະຈຳຂອງກຸ່ມຕົນ. ແຕ່ລະກຸ່ມຈະຜູກພັນກັບນົກ ຫຼື ສັດຊະນິດໃດໜຶ່ງ ເພື່ອ

ຖືເປັນສັນຍາລັກປະຈຳຂອງຕົນ ແລະ ໄດ້ມີລະບຽບການໃສ່ໂທດຄັກແນ່ ຕໍ່ທຸກໆການຂ້າ ຫຼື ກິນສັດພັນນັ້ນ. ບັນ ດາກຸ່ມແຊງ ລ້ວນແຕ່ຍຶດຖືຫຼັກເກນສືບພັນຂ້າມແຊງ, ໝາຍຄວາມວ່າ ຫ້າມແຕ່ງງານລະຫວ່າງ ບ່າວ ແລະ ສາວ ໃນແຊງດຽວກັນ.

ຕາມມູນເຊື້ອ, ການແຕ່ງງານແມ່ນພໍ່ແມ່ເປັນຜູ້ຈັດແຈງໃຫ້. ດັ່ງນັ້ນບ່ອນຢູ່ອາໃສຕາມຮີດຄອງຂອງຜົວ ເມຍໃໝ່ຈຶ່ງແມ່ນເຮືອນຂອງຝ່າຍຊາຍ, ໝາຍເຖິງເຮືອນຂອງຄອບຄົວທາງຜົວ; ແຕ່ລາງເທື່ອກໍຢູ່ເຮືອນພໍ່ແມ່ເມຍ, ຫາກເປັນເຂີຍສູ່; ກໍລະນີນີ້ເກີດຂຶ້ນໃນເງື່ອນໄຂທີ່ຝ່າຍເຂີຍບໍ່ມີຊັບສິນເງິນຄຳ ເພື່ອຈ່າຍຄ່າດອງ ຊຶ່ງກຳນົດຂຶ້ນໂດຍພໍ່ແມ່ຂອງໄພ້. ເພື່ອສຳລະສະສາງຄ່າດອງ, ເຂີາ ແລະ ເມຍໃໝ່ ຕ້ອງໄປ ຢູ່ນຳພໍ່ເຖົ້າແມ່ເຖົ້າ ແລະ ຮ່ວມແບກຫາບທຸກວຽກໜັກການໜາຂອງຄອບຄົວ. ຕາມປົກກະຕິ ອັນນີ້ມັກ ກິນເວລາສາມຫາສີ່ປີ, ຫຼັງຈາກນັ້ນ ຄູ່ຜົວເມຍສາມາດຍ້າຍອອກໄປຢູ່ເຮືອນຂອງຕົນເອງ ຫຼື ຂອງພໍ່ແມ່ ຜົວໄດ້.

ຊາວຂະມຸສ່ວນໃຫຍ່ຍຶດຖືຫຼັກຜົວດຽວເມຍດຽວ, ການເອົາເມຍນ້ອຍຫ້ອຍເມຍປາຍທີ່ພໍມີໃຫ້ເຫັນໃນ ອະດີດນັ້ນ ແມ່ນເກີດຂຶ້ນໃນຄອບຄົວຮັ່ງມີໂດຍສະເພາະເທົ່ານັ້ນ.

## ເບິ່ງລວມ :  ມົ້ງ - ມຽນ ຫຼື ຢ້າວ-ແມ້ວ.

ຊົນເຜົ່າມົ້ງ “ ຍັງເອີ້ນອີກວ່າ ແມ້ວ ) ແລະ ມຽນ ( ຍັງເອີ້ນວ່າ ຢ້າວ ) ສັງກັດໃນຕະກູນພາສາມົ້ງ-ມຽນ. ພວກເຂົາເຈົ້າເຂົ້າມາໃນອາຊີອາຄະເນລຸນຫຼ້າໝູ່-ສ່ວນຫຼາຍແມ່ນໃນສະຕະວັດທີ 19 ແລະ ຕົ້ນສະຕະວັດ ທີ່ 20. ບ້ານເກີດເມືອງນອນເດີມຂອງເຂົາເຈົ້າຢູ່ທີ່ພາກໃຕ້ຂອງປະເທດຈີນ ແລະ ເພິ່ນເຄີຍພົບເຫັນ ພວກເຂົາເຈົ້າຢູ່ຮູໜານ, ຢູນໜານ, ກຸຍຊູ, ກວາງຊີ, ກວາງຕຸ້ງ ຕະຫຼອດ ຮອດບົນດອນເຢຈຽງ ແລະໄຮ ນານ. ປັດຈຸບັນເພິ່ນຍັງເຫັນມີຊາວມົ້ງ ແລະ ມຽນ ຢູ່ພະມ້າ, ພາກເໜືອໄທ, ພາກເໜືອລາວ ແລະ ຫວຽດນາມ ( ແລະ ທີ່ສະຫະລັດອາເມເລີກາ ແລະ ຝັ່ງ ອີກ ຕື່ມ ).

ຊາວມົ້ງ ແລະ ຢ້າວ  ( ຍົກເວັ້ນ ກິ່ງກຸ່ມລ້ານແຕນ ) ເປັນຊຸມຊົນເຂດພູສູງ, ມັກຢູ່ຕາມໂນນພູທີ່ມີ ລະດັບຄວາມສູງ ລະຫວ່າງ 1000-13000 ແມັດ. ເຂົາເຈົ້າຖາງປ່າເຮັດໄຮ່ປູກເຂົ້າຈ້າວ, ສາລີ ແລະ ພືດຜັກນາໆຊະນິດ, ລ້ຽງໝູ ແລະ ໄກ່. ໃນລະດູແລ້ງ ທັງເຜົ່າມົ້ງ ແລະ ຢ້າວ ພາກັນປູກຢາ ຝິ່ນ, ປົກກະຕິ ແມ່ນເພື່ອໃຊ້ສອຍສ່ວນຕົວ, ເຊັ່ນໄຊ້ເຮັດຢາແກ້ເຈັບແກ້ປວດ ແລະ ປົວພະຍາດ.

ທັງສອງເຜົ່າມົ້ງ ແລະ ຢ້າວ ຍຶດຖືເສີງແຊງ ແລະ ຫຼັກການແຕ່ງງານຂ້າມເສີງ ທັງສືບເຊື້ອສາຍ ທາງຝ່າຍ ຊາຍເປັນໃຫຍ່, ປະຕິບັດຮີດຖືຜີ ແລະ ວິນຍານບັນພະບູລຸດໄປພ້ອມໆກັນ. ລະບົບ ຄວາມເຊື່ອຖືຂອງ ເຜົ່າຢ້າວ ຍັງຮວມມີທໍບູຊາພະເຈົ້າຕາວ. ຕາວ ແມ່ນສາສະໜາອັນໜຶ່ງຂອງ ຊາວຈີນ. ການຖືຕາວ, ການສືບເຊື້ອທາງຝ່າຍພໍ່ ແລະ ການເສັ້ນໄຫວ້ບັນພະບຸລຸດ ບົ່ງບອກວ່າ ເຜົ່າຢ້າວ ແລະ ມົ້ງ  ໄດ້ຮັບອິດ ທິພົນທາງວັດທະນະທຳຈາກການພົວພັນອັນໃກ້ຊິດກັບຊາວຈີນ ຮົ່ານ ມາເປັນເວລາດົນນານ. ນອກນັ້ນ ຢ້າວ ແລະ ລ້ານແຕນ ຍັງໃຊ້ໜັງສືຈີນດັດແປງ ເພື່ອຂຽນ ຄຳພີສາສະໜາ ແລະ ຕຳນານພື້ນແຜ່ນຂອງພວກຕົນ.

ຊາວມົ້ງແບ່ງອອກເປັນກິ່ງເຜົ່າຈຳນວນໜຶ່ງ ທີ່ມີຄວາມແຕກຕ່າງກັນດ້ານເລັກໜ້ອຍໃນການ ປາກເວົ້າ ແລະການນຸ່ງຖື. ທີ່ ສປປ.ລາວ ມີສາມກິ່ງມົ້ງຄື: ມົ້ງຂຽວ, ມົ້ງລາຍ ແລະ ມົ້ງຂາວ. ເຜົ່າ ຢ້າວກໍແບ່ງເປັນ
ກິ່ງຄືກັນ.

ເຖິງຢ່າງໃດກໍດີ,ເພິ່ນຍັງຖົກຖຽງກັນບໍ່ແລ້ວວ່າຄວນຈັດລຽງກຸ່ມເຜົ່າລ້ານແຕນຄືແນວໃດ. ພວກ ເຂົາເຈົ້າເປັນຊົນເຜົ່າໜຶ່ງຕ່າງຈາກຢ້າວບໍ່? ຫຼືວ່າເປັນກິ່ງກຸ່ມໜຶ່ງໃນວົງຄະນາຍາດອັນກວ້າງໃຫຍ່ ຂອງຢ້າວ? ແຕ່ວ່າການນຸ່ງຖືຂອງພວກແມ່ຍິງ ພັດມີອັນແຕກຕ່າງກັນຢ່າງແຈ່ມແຈ້ງ, ແມ່ຍິງ ຢ້າວນຸ່ງໂສ້ງທີ່ປະດັບ ລາຍດອກຖັກແສ່ວອັນພິຖີພິຖັນ ແລະ ປານີດ,  ແລະ ນຸ່ງເສື້ອຍ່າມດຳ ທີ່ ແຂບດ້ວຍພວງຜ້າຂົນແດງ ສະດຸດຕາ.  ພວກເຂົາເຈົ້າຖືຜ້າຜືນກວ້າງຄຽນຫົວ. ສ່ວນເຄື່ອງນຸ່ງຖື ຂອງແມ່ຍິງລ້ານແຕນ ຊ້ຳຜັດງ່າຍ ດາຍກວ່າ ບໍ່ມີລາຍຫຍິບຖັກປັກແສ່ວໃດໆ,ທັງບໍ່ໃຊ້ຜ້າຄຽນ ຫົວ. ແຕ່ແລ້ວ, ລະດັບຄວາມຄ້າຍກັນດ້ານ ພາສາ, ຄອບຄົວ ແລະ ໂຄງສ້າງທາງສັງຄົມ ຕະ

ຫຼອດເຖິງລະບົບຄວາມເຊື່ອຖື (ຮວມທັງພື້ນແຜ່ນເທບ ນິຍາຍດັ້ງເດີມ) ຊໍ້າຜັດເປັນຂໍ້ອ້າງອີງອັນໜັກແໜ້ນວ່າ ທັງສອງພວກເປັນກິ່ງກຸ່ມຂອງວົງຄະນາຍາດຢ້າວ ຫຼື ມຽນນຳກັນ.

**ໂສມໜ້າ : ເຜົ່າອາຄ່າ**

ອາຄ່າ ເປັນເຜົ່າໜຶ່ງທີ່ປາກພາສາໃນກຸ່ມຕິເບ-ພະມ້າ, ປັດຈຸບັນສາມາດພົບເຫັນຢູ່ຈີນ, ພະມ້າ, ໄທ, ສປປ.ລາວ ແລະ ຫວຽດນາມ. ບ້ານເກີດເມືອງນອນກົກເຄົ້າຂອງເຂົາເຈົ້າແມ່ນຈີນ ແລະ ເລີ່ມມາປະກົດຕົວເປັນຄັ້ງທຳອິດຢູ່ລາວ ໃນກາງສະຕະວັດທີສິບເກົ້າ, ແຕ່ສ່ວນຫຼວງຫຼາຍເຂົ້າມາໃນສະຕະວັດທີ ຊາວ.

ໃນ ສ.ປ.ປ.ລາວ ພວກເຂົາເຈົ້າມັກຖືກຮຽກວ່າອີກໍ້, ກໍ່ ຫຼື ຂ້າກໍ່. ເຂົາເຈົ້າຢັ່ງຢາຍກັນຢູ່ທົ່ວແຂວງຫຼວງນໍ້າທາ, ແຕ່ຈະເຫັນຫຼາຍເປັນພິເສດຢູ່ຕາມເຂດພູດອຍ ເມືອງສິງ ແລະ ໃນເຂດປ່າສະຫງວນແຫ່ງຊາດ ທີ່ເມືອງນໍ້າທາ. ຊົນເຜົ່າອາຄ່າ ກວມເຖິງ 22% ຂອງພົນລະເມືອງແຂວງຫຼວງນໍ້າທາ.

## ການຕັ້ງຖິ່ນຖານ ແລະ ເຮືອນ

ແຕ່ໃດໆມາ ບ້ານຂອງຊາວອາຄ່າ ມັກສ້າງຕັ້ງໃສ່ຈຸດສູງຂອງເປີ້ນພູ ໃນລະດັບຄວາມສູງເໜືອ 600 ແມັດຂຶ້ນເມືອ. ປົກກະຕິແຕ່ 1000 ຫາ 1500 ແມັດ. ແຕ່ເມື່ອບໍ່ດົນມານີ້ ຫຼາຍບ້ານໄດ້ຫຍັບຍ້າຍລົງ ມາຢູ່ລະຫວ່າງ 400 ຫາ 600 ແມັດ. ບ້ານຂອງອາຄ່າ ມີສິ່ງບົ່ງບອກຢູ່ສອງຢ່າງຄື: ຫຼັກໂອ່ນຊາ ( ສຳ ລັບປາງບຸນໂອ່ນຊາ ) ແລະ ປະຕູໂຂງຢູທາງໜ້າ ຫຼື ທາງຫຼັງບ້ານ. ປະຕູໂຂງເປັນຫຼັກໝາຍເຂດແດນລະຫວ່າງໂລກມະນຸດທີ່ຢູ່ທາງໃນ ແລະ ໂລກທຳມະຊາດຢູ່ທາງນອກ. ຕາມປົກກະຕິ ເສົາປະຕູໂຂງທັງ ສອງຂ້າງ ຈະຕິດຮູບໄມ້ຄວັດຊາຍຍິງຄູ່ໜຶ່ງ. ແຂກຄົນທີ່ມາຢາມບ້ານ ສາມາດຍ່າງຜ່ານປະຕູໂຂງເຂົ້າ ໄປໄດ້, ແຕ່ບໍ່ໃຫ້ແຕະຕ້ອງປະຕູໂຂງ, ຮູບໄມ້ຄວັດ ຫຼື ອັນໃດກໍແລ້ວແຕ່ທີ່ຢູ່ໃນປະຕູໂຂງນັ້ນ. ປະຕູໂຂງ ນີ້ຕ້ອງໄດ້ເຮັດຄືນໃໝ່ໃນແຕ່ລະປີ. ບາງບ້ານຍັງມີເຮືອນສະເພາະເພື່ອໃຫ້ພວກບ່າວສາວໄດ້ພົບພໍ້ກັງວ ພາລາສີກັນຕາມໃຈຊອບ.

ເຮືອນອາຄ່າ ເປັນເຮືອນຮ້ານຕັ້ງເສົາ, ເຮັດດ້ວຍໄມ້ຈິງ, ໄມ້ປ່ອງ ແລະ ຫຍ້າຄາຄືກັນ. ເຮືອນອາຄ່າມີ ເອກະລັກຕ່າງໝູ່ຢູ່ບ່ອນທີ່ມີປະຕູສະເພາະ ສຳລັບຜູ້ຊາຍ ແລະ ອີກປະຕູນຶ່ງຕ່າງຫາກສຳລັບຜູ້ຍິງ. ປະຕູສຳລັບຜູ້ຍິງ ນຳໄປຫາຫ້ອງນອນຂອງພວກຜູ້ຍິງໂດຍກົງ. ຊາຍຈາກທາງອື່ນບໍ່ໄດ້ເຂົ້າໄປໃນຫ້ອງນີ້ ໂດຍບໍ່ໄດ້ຖືກເຊີນຊວນຢ່າງເດັດຂາດ. ຮ້ານບູຊາບັນພະບູລຸດຢູ່ໃນຫ້ອງຂອງພວກແມ່ຍິງ ແລະ ບໍ່ໄດ້ ແຕະຕ້ອງຢ່າງເດັດຂາດ. ພາຍໃນເຮືອນມີເຂດສຳລັບເຮັດວຽກ ແລະ ໃຊ້ສອຍຮ່ວມກັນ.

## ເສດຖະກິດ

ຊາວອາຄ່າ ເຮັດໄຮ່ຢູ່ແຖບພູສູງເພື່ອປູກເຂົ້າຈ້າວ, ສາລີ,ຝ້າຍ, ພືດຜັກຕ່າງໆ, ຖົ່ວດິນ, ງາ ແລະ ຖົ່ວ ເຫຼືອງ. ໃນລະດູແລ້ງ ແມ່ນປູກຝິ່ນເປັນຕົ້ນຕໍ.

ລ່າສັດ ແລະ ໃສ່ແຮ້ວຈັບສັດປ່າມາເປັນອາຫານເພີ່ມເຕີມ ແມ່ນການເຄື່ອນໄຫວທີ່ຊາວອາຄ່ານິຍົມຊົມຊອບ. ແຕ່ຢ່າງໃດກໍດີ, ໃນໄລຍະຂະລໍາທຸກການພົວພັນທາງເພດ ໄດ້ຂະໜາບໃຫ້ພວກຜູ້ຊາຍຕ້ອງລະເວັ້ນທຸກການລ່າສັດປ່າໃຫ່ຍໆ ເພື່ອຫຼຸດຜ່ອນການລົ້ມຕາຍຂອງພວກມັນ.

## ຄອບຄົວ ແລະ ການແຕ່ງງານ

ເຜົ່າອາຄ່າ ສືບເຊື້ອສາຍທາງພໍ່ ຊຶ່ງຖືກຜູກມັດຈ່ອງຈໍາດ້ວຍການພົວພັນເຊື້ອສາຍອັນຍາວໄກ ແລະ ສະ ຫຼັບສັບຊ້ອນ. ຍ້ອນແນວນັ້ນ, ທຸກໆຄົນສາມາດຮູ້ໄດ້ຢ່າງຖືກຕ້ອງຊັດເຈນວ່າ ໃຜເປັນໃຜ, ເປັນລູກເຕົ້າ ເຫຼົ່າກໍຂອງໃຜ. ຊາວອາຄ່າແຕ່ລະຄົນ ຖືຕົນເອງເປັນຂົວຕໍ່ລະຫວ່າງ ບັນພະບຸລູດຂອງຕົນ ກັບລູກໆ ຫຼານໆ, ແລະ ການຕ້ອງຮຽນຮູ້ເຊື້ອສາຍລາຍລ່ອງຂອງໃຜຂອງລາວແບບທ່ອງຂຶ້ນໃຈ ນັ້ນເປັນສາຍຜູກ ພັນອັນໜຶ່ງ ທີ່ເຊື່ອມຕໍ່ລະຫວ່າງພວກເຂົາເຈົ້າ.

ຊາຍໜຸ່ມຍິງສາວອາຄ່າ ມີອິດສະຫຼະພາບຫຼາຍສົມຄວນ ເພື່ອສໍາພັນທາງເພດນໍາກັນກ່ອນການແຕ່ງ ງານ, ແລະ ການມີທ້ອງກ່ອນແຕ່ງງານ ບໍ່ຖືກຖືເປັນເລື່ອງໜ້າອັບອາ, ຫາກເປັນພຽງສິ່ງບົ່ງບອກເຖິງ ການເປັນແມ່ແຜ່ພັນເກັ່ງເທົ່ານັ້ນ. ຊາວອາຄ່າ ປົກກະຕິແລ້ວຈະຍຶດໝັ້ນໃນຄວາມເປັນຜົວດຽວເມຍດຽວ, ແຕ່ວ່າຄົນຮັ່ງຫຼືມີອໍານາດບາດໃຫຍ່ ສາມາດເອົາເກີນກວ່າສາມເມຍ. ສາເຫດຂອງການເອົາເມຍ ເພີ່ມນັ້ນ ອາດຮວມມີບັນຫາເມຍກົກເປັນແມ່ໝັນ ຫຼື ບໍ່ສາມາດເກີດລູກຊາຍ. ເປັນເລື່ອງປົກກະຕິທີ່ຜູ້ ເປັນຜົວຈະຖາມຂໍອະນຸຍາດຈາກເມຍໃຫຍ່ກ່ອນ ຈຶ່ງເອົາເມຍນ້ອຍ. ພວກແມ່ຍິງຕ້ອງສືບສະກູນທາງ ຝ່າຍຜົວຫຼັງການແຕ່ງງານ ແລະ ຍ້າຍໄປຢູ່ນໍາຄອບຄົວພໍ່ແມ່ຂອງຜົວ ຫຼືບໍ່ກໍພາກັນໄປຕັ້ງເຮືອນຢູ່ໃກ້ໆ ຫັ້ນ.ເຖິງວ່າການຢ່າຮ້າງກັນບໍ່ເປັນເລື່ອງແປກປະຫຼາດ, ແຕ່ການອອກລູກແຕ່ລະເທື່ອນັບວ່າເປັນເລື້ອງ ຫຍຸ້ງຍາກ ແລະ ສິ້ນເປືອງໜັກໜ້າ. ກໍເພາະພວກລູກເຕົ້າຕາມປົກກະຕິແລ້ວຈະຢູ່ນໍາຄອບຄົວທາງຜົວ ສະເໝີ.

## ສາສະໜາ

ຊີວິດການເປັນຢູ່ຂອງອາຄ່າ ມີຈຸດແຕກຕ່າງກັນຢູ່ທີ່ເຂົາເຈົ້າຍຶດຖືຮີດຄອງປະເພນີ ແລະ ຫຼັກຈັນຍາບັນ ອັນໜຶ່ງຊຶ່ງເອື້ອອໍານວຍໃຫ້ເຂົາເຈົ້າໄດ້ມີແນວທາງສະເພາະຂອງຕົນ ເພື່ອການດໍາລົງຊີວິດ - ບາງເທື່ອ ເພິ່ນເອີ້ນອັນນີ້ວ່າ " ແບບແຜນອາຄ່າ " ( ອາຄ່າຊາງ ) . " ແບບແຜນອາຄ່າ " ບໍ່ສະເພາະແຕ່ກວມ ເອົາບັນດາມູນເຊື້ອ, ພິທີກໍາ ແລະ ກົດໝາຍປະເພນີທັງໝົດໆເທົ່ານັ້ນ, ຫາກຍັງກໍານົດບົ່ງບອກເຖິງວິ ທີເຮັດການປູກຝັງ, ການລ່າສັດ, ການບົ່ງມະຕິພະຍາດ ແລະ ການປິ່ນປົວ, ຕະຫຼອດເຖິງແບບວິທີປະ ພຶດໃນການພົວພັນຊຶ່ງກັນແລະກັນ ແລະ ກັບຄົນຈາກພາຍນອກ. "ເຊີມາ" ຫຼື " ຜູ້ສ້າງ" ບ້ານ ມີພາລະ ໜ້າທີ່ຄໍ້າປະກັນໃຫ້ແບບແຜນອາຄ່າ ໄດ້ຮັບການປະຕິບັດຕາມຢ່າງຖືກຕ້ອງ. ເຊີມາ ແມ່ນຊາຍຄົນໜຶ່ງ ທີ່ຖືກຄັດເລືອກຂຶ້ນມາຍ້ອນມີຄວາມບໍລິສຸດຂາວສະອາດ ແລະ ຍ້ອນພໍ່ຕູ້ ຫຼື ພໍ່ຂອງຕົນເຄີຍໄດ້ເປັນອາ ຈານດ້ານພິທີກໍາປະຈໍາບ້ານ ແລະ ຍ້ອນມີຄວາມຮູ້ຄວາມເຂົ້າໃຈເຖິງຖອງກ່ຽວກັບ "ແບບແຜນອາຄ່າ". ຖານະຕໍາແໜ່ງຂອງ

ເຂົາສຳຄັນ ແລະ ສູງສັກຍິ່ງກວ່າຕຳແໜ່ງນາຍບ້ານ ທີ່ຮັບຜິດຊອບສະເພາະແຕ່ວຽກປົກຄອງທາງໂລກເທົ່ານັ້ນ.

ແຕ່ຢ່າງໃດກໍດີ, ຊາວອາຄ່າກໍມີລະບົບການຖືຜີທີ່ສະຫຼັບສັບຊ້ອນ ແລະ ແຕ່ລະບ້ານອາດມີໝໍຜີເຖິງ ສອງຄົນ. ຜູ້ໜຶ່ງແມ່ນຍາພໍ່ໝໍຜີ, ເອີ້ນວ່າ "ຜີມາ" ທີ່ມີໜ້າທີ່ຮັບຜິດຊອບນຳພາຈັດພິທີກຳເຮັດຮີດບ້ານ
ຄອງເມືອງ ເພື່ອໃຫ້ບ້ານຢູ່ເຢັນເປັນສຸກ.ອີກຜູ້ໜຶ່ງແມ່ນ"ນິພາ"ຊຶ່ງສ່ວນຫຼາຍແມ່ນຜູ້ຍິງຮັບພາລະ. ໝໍຜີ ຍິງນີ້ຂ້ອນຂ້າງຫາຍາກ. ໝໍຜີນິພາແມ່ນຜີນາງທຽມທີ່ເຂົ້າຊິງ ແລະ ຕິດຕໍ່ສື່ສານກັບໂລກແຫ່ງຜີໄດ້,ສະ ເພາະຢ່າງຍິ່ງເພື່ອປິ່ນປົວກ່ຽວກັບພະຍາດ. ຕາມມູນເຊື້ອຂອງອາຄ່າ, ຊ່າງຕີເຫຼັກມີຖານະບົດບາດສຳ ຄັນຢູ່ໃນບ້ານ ເພາະວ່າເຂົາເປັນຜູ້ຕີມີດ ແລະ ດາບສັກສິດ ທີ່ພວກໝໍຜີຖືໃນພິທີກຳຕ່າງໆ.

ອາຄ່າ ຖືສາສະໜາສະເພາະຂອງຕົນ ທີ່ອີງໃສ່ລະບົບການເຮັດຮີດບະບົນຜີທີ່ຕິດພັນສະໜິດແໜ້ນກັບ ການບູຊາເສັ້ນໄຫວ້ບັນພະບູລຸດ. ຜີບັນພະລູລຸດຈະຕ້ອງໄດ້ຮັບການລ້ຽງດູ ແລະ ອຸປະຖາກຮັກສາສີ່ເທື່ອ ຕໍ່ປີເປັນຢ່າງໜ້ອຍ ຄື: ໃນປີໃໝ່, ຍາມລົງເຂົ້າໄຮ່, ບຸນໂອ່ນໂລ່ນຊາ ແລະ ໃນລະດູເກັບກ່ຽວເຂົ້າ.ອາດເວົ້າໄດ້ວ່າຄວາມເຊື່ອຖືທາງສາສະໜາຂອງຊາວອາຄ່າ ຕິດພັນກັບຄວາມນັບຖືຢ່າງເລິກເຊິ່ງຕໍ່ສະພາບແວດລ້ອມທາງທຳມະຊາດ ຊຶ່ງຢູ່ໃຕ້ການຄຸ້ມຄອງຂອງບັນດາຜີຜູ້ໃຫ້ການປົກປັກເບິ່ງແຍງ.

**ການຕໍ່າຫໍ ແລະ ເຄື່ອງນຸ່ງຫົ່ມ.**

ພວກແມ່ຍິງອາຄ່າຕ່ຳຜ້າແພໜາເຮັດເຄື່ອງນຸ່ງຫົ່ມດ້ວຍຝ້າຍທີ່ປູກເອົາເອງ.ຜ້າທີ່ຕ່ຳໄດ້ຖືກນຳໄປຍ້ອມ ຄາມແກ່ ຫຼື ດຳນິນຈາກຕົ້ນຫ້ອມ ທີ່ເຂົາເຈົ້າປູກເອົາເຊັ່ນກັນ. ພວກເດັກຍິງໄວຫົກເຈັດຂວບໄດ້ຖືກສິດ ສອນໃຫ້ຮູ້ປັ່ນຝ້າຍດ້ວຍໝາກປັ່ນອັນງ່າຍດາຍແລ້ວ. ພວກເຂົາເຈົ້າໃຊ້ທຸກໂອກາດຍາດທຸກເວລາເພື່ອ ປັ່ນຝ້າຍ. ນັບວ່າເປັນເລື່ອງປົກກະຕິທຳມະດາທີ່ເພິ່ນພົບເຫັນພວກແມ່ຍິງ ແລະຊຸມຜູ້ສາວຍ່າງໄປໄຮ່ໂດຍ ປັ່ນຝ້າຍໄປນຳ.

ພວກຜູ້ຍິງອາຄ່າ ເປັນທີ່ເບິ່ງອອກໄດ້ງ່າຍດາຍ ຍ້ອນຊຸດນຸ່ງຖືຕ່າງຕາຂອງເຂົາເຈົ້າ ຊຶ່ງຮວມມີສິ້ນຝ້າຍ ດຳເຂັ້ມໆ, ເສື້ອຮັດເອິກ ແລະ ແອວສີດຳ ທີ່ປົກດ້ວຍເສື້ອຄຸມ ຊຶ່ງປະດັບດ້ວຍລາຍຖັກແສ່ວ ທີ່ຖືກອອກແບບຢ່າງພາກພຽນ. ເຂົາເຈົ້າຖືຜ້າພັນແຄ່ງຂາທີ່ມີລາຍປະດັບ ເພື່ອປ້ອງກັນແຄ່ງຂາເວລາເມືອໄຮ່ໄປມາ.
ແຕ່ສິ່ງທີ່ເປັນເອກະລັກໂດດເດັ່ນທີ່ສຸດຂອງແມ່ຍິງອາຄ່າແມ່ນໝວກ. ແມ່ຍິງອາຄ່າທັງໝົດລ້ວນແຕ່ໃສ່ ໝວກ. ໝວກອັນປານີດ,ຊຶ່ງເປັນເຄື່ອງໝາຍບົ່ງບອກວ່າເຂົາເຈົ້າໄດ້ຂ້າມຜ່ານໄປສູ່ໄວເຕັມກະສຽນແລ້ວ. ໝວກເປັນເໝືອນຕົວແທນສະເພາະຂອງແມ່ຍິງແຕ່ລະຄົນ ແລະ ນາງຈະຫຸ່ມ

ເທເວລາບໍ່ໜ້ອຍໃສ່ການ ປະດັບເອ້ໝວກຂອງຕົນດ້ວຍໝາກປັດ, ລາຍປັກເສັ້ນດ້ວຍດ້າຍສີຕ່າງໆ, ຂົນລີງໜ້ອຍໜຶ່ງ ແລະ ເງິນຫຼຽນອ້ອມຮອບ.

ພວກແມ່ຍິງລ້ວນແຕ່ມີ ຫຼືມັກໃສ່ເຄື່ອງເອ້ດ້ວຍເງິນ, ເຊັ່ນກ້ອງຄໍ, ຫຼຽນເງິນ ຕະຫຼອດເຖິງເງິນຫຼຽນນ້ອຍ ຫຍິບຮ້ອຍໃສ່ໝວກ. ເຄື່ອງເອ້ ແລະ ເຄື່ອງປະດັບດ້ວຍເງິນຂອງພວກແມ່ຍິງ ແນ່ນອນແລ້ວວ່າມີຈຳ ນວນແຕກຕ່າງກັນໄປໂດຍອີງຕາມສິນສອດຄ່າດອງ ແລະ ຖານະເສດຖະກິດຂອງແຕ່ລະຄົນ.

## ເຂດ ປສຊ ນ້ຳທ້າ

- ໄດ້ຮັບການສ້າງຕັ້ງ ໃນປີ 1993
- ມີເນື້ອທີ່ 222,400 ເຮັກຕາ ຫຼື 2000 ກມ ມົນທົນ ( ສູງລື່ນລະດັບນ້ຳທະເລ ແຕ່ 500 ເຖິງ 2094 ແມັດ ).
- ຕິດຈອດກັບເຂດອະນຸລັກຮັກສາຊຽງຢີງ ແຫ່ງແຂວງຢຸນນານ ສປປ.ຈີນ.
- ມີສັດໃຫຍ່ທີ່ລ້ຽງລູກດ້ວຍນົມ 37 ຊະນິດຢູ່ອາໃສ. ທັງໝົດ ເປັນຈຳພວກສັດຫາຍາກ ຫຼື ຖືກນາບຂູ່ສູນພັນ. ໃນຈຳພວກນີ້ ຮວມມີເສືອດາວ, ເສືອໂຄ່ງ ແລະ ເສືອກະລູດລາຍເຝືອ, ລີງກັງ, ລິ່ນ; ຊ້າງ, ໝີດຳ, ໝີນ້ອຍຄໍກ່ານ, ກະທິງ, ຄວາຍປ່າ.
- ມີນົກ 288 ຊະນິດ ໃນ ສປຊ ນ້ຳທ້າ. ໃນຈຳນວນທີ່ເປັນປະເພດສຳຄັນ ຮວມມີໄກ່ຂວາສີເງິນ, ນົກກະທາຄໍກ່ານສີນ້ຳຕານ,ນົກຂວາໃຫຍ່ສີມີ່ນ, ນົກເງືອນໃຫຍ່, ນົກແກ້ວເອິກລາຍດາວ, ນົກຖົວຄໍມີ່ນ.
- ມີ 5 ຊົນເຜົ່າອາໃສຢູ່ໃນເຂດ ປສຊ ນ້ຳທ້າ, ກ່າວຄື: ເຜົ່າຂະມຸ, ອາຄາ, ມົ້ງ, ຢ້າວ ແລະ ລານແຕນ ( ລາວຫ້ວຍ ).
- ມີ 25 ບ້ານຢູ່ໃນເຂດ ປສຊ ນ້ຳທ້າ ແລະ 65 ບ້ານ ຢູ່ໃນເຂດອ້ອມຮອບ ແຕ່ຮ່ວມນຳໃຊ້ດິນ ຫຼື ຊັບພະຍາກອນ ຢູ່ໃນ ປສຊ.

## ການຄຸ້ມຄອງ

ເຂດ ປສຊ ນ້ຳທ້າ ຢູ່ພາຍໃຕ້ການຄຸ້ມຄອງ ຂອງໜ່ວຍງານຄຸ້ມຄອງ ປສຊ ນ້ຳທ້າ ຂຶ້ນກັບພະແນກກະສິກຳ ແລະ ປ່າໄມ້ຂອງແຂວງ. ການເຄື່ອນໄຫວຄຸ້ມຄອງຮ່ວມມີ :

- ຈັດຕັ້ງຜັນຂະຫຍາຍ ແລະ ປະຕິບັດແຜນການ ໂດຍຮ່ວມມືກັບບັນດາຊຸມຊົນໃນທ້ອງຖິ່ນ ເພື່ອຄຸ້ມຄອງ ແລະ ປົກປັກຮັສກາເຂດ ປສຊ. ເພິ່ນຮຽກການຄຸ້ມຄອງນີ້ວ່າ ການຄຸ້ມຄອງແບບປະສານຮ່ວມມື ຫຼື ການຄຸ້ມຄອງຮ່ວມກັນ.
- ບັງຄັບປະຕິບັດບັນດາຂໍ້ກຳນົດກົດລະບຽບລະດັບຊາດ, ແຂວງ ແລະ ປສຊ ເອງ.
- ສຶກສາອົບຮົມ ແລະ ປູກຝັງຈິດສຳນຶກອະນຸລັກຮັກສາ ປສຊ.
- ສຳຫຼວດເບິ່ງສັດປ່າ ແລະ ກວດກາລາດຕະເວນ ປສຊ.
- ໝາຍເຂດແດນ ປສຊ
- ວາງແຜນການຄຸ້ມຄອງ

## ໂສມໜ້າ : ບັດອະນຸຍາດທ່ຽວຊົມ ປສຊ ນ້ຳທ້າ

ໜ່ວຍງານຄຸ້ມຄອງ ປສຊ, ຫ້ອງການອະນຸລັກຊັບພະຍາກອນປ່າໄມ້, ອຳນາດການປົກຄອງແຂວງຫຼວງນ້ຳທາ ແລະ ໂຄງການທ່ອງທ່ຽວທຳມະຊາດແບບອະນຸລັກນ້ຳທ້າ ເປັນຜູ້ທຳອິດໃນ ສປປ.ລາວ ທີ່ໄດ້ສ້າງ ບັດອະນຸຍາດທ່ຽວຊົມປ່າຢ່າງຖືກກົດໝາຍ ໃນເດືອນທັນວາ ປີ 2000. ຄ່າອອກໃບອະນຸຍາດທ່ຽວຊົມປ່າແມ່ນ 1 ໂດລາຕໍ່ຄົນແລະ ຕໍ່ມື້.ນັກທ່ອງທ່ຽວທຸກຄົນທີ່ຍາກຍ່າງທ່ຽວຢູ່ພາຍໃນເຂດ ປສຊ ນ້ຳທ້າ ຈະຕ້ອງໄດ້ຊື້ບັດອະນຸຍາດສາກ່ອນ. ໃນປັດຈຸບັນນີ້ ມີແຕ່ນັກທ່ອງທ່ຽວທີ່ໃຊ້ບໍລິການຂອງຜູ້ພາທ່ຽວ ຊຶ່ງ

ໄດ້ຮັບການຮັບຮູ້ຢັ້ງຢືນໂດຍທ້ອງຖິ່ນເທົ່ານັ້ນ ຈຶ່ງມີສິດໄດ້ຮັບບັດອະນຍາດທ່ຽວຊົມປ່າ. ເງິນທີ່ໄດ້ ຈາກການອອກບັດອະນຸຍາດ ຕົກເປັນຂອງໜ່ວຍງານຄຸ້ມຄອງ ປສຊ ນ້ຳຫ້າ, ຫ້ອງການອະນຸລັກຊັບພະຍາກອນປ່າໄມ້ ແລະ ບັນດາໝູ່ບ້ານໂດຍກົງ ເພື່ອນຳໃຊ້ເຂົ້າໃນຈຸດປະສົງອະນຸລັກປ່າໄມ້ ແລະ ສັດປ່າ ແລະ ເພື່ອການຮັກສາປົວແປງສາຍທາງທ່ອງທ່ຽວ.

ລະບຽບຫຼັກການໃນການທ່ຽວປ່າ ໄດ້ ບົ່ງແຈ້ງໄວ້ໃນດ້ານຫຼັງຂອງແຕ່ລະບັດອະນຸຍາດ.

ເລກທີ:..............

**ກະຊວງກະສິກຳ ແລະ ປ່າໄມ້**

Ministry of Agriculture and Forestry of the Lao PDR

ພະແນກກະສິກຳ ແລະ ປ່າໄມ້

Luang Namtha Department of Agriculture and Forestry

ປ່າສະຫງວນແຫ່ງຊາດ ນ້ຳຫ້າ

Nam Ha National biodiversity Conservation Area

## ບັດອະນຸຍາດ ເດີນປ່າ

## Trekking Permit

Name / ຊື່...................................................

Nationality / ສັນຊາດ .................................

Passport **No**/ນ້ຳເບີໜັງສືເດີນທາງ..........................

Dates of trek / ວັນທີຍ່າງທ່ຽວປ່າ້...........................

.............. Route / ເສັ້ນທາງຍ່າງ..........................

..........

Fee / ລາຄາ ...............................................

**Reminder**

Trekking is permitted only with certified guides
Please keep this permit with you
This permit should be shown to village and local authorities upon demand
To show respect for the local Culture please

- Check with your guide if you have any question regarding appropriate behavior
- Refrain from giving personal gifts, it encourages begging
- Please respect holy places and villager's privacy
- The use of drugs is prohibited in the Lao PDR

In order to minimize your impact on the environment, we ask that you

- Carry out all trash that you generate
- Do not buy or consume wildlife products
- Please help reduce the risk of forest fires
- Stay on the designated trail

ຂໍ້ແນະນຳ:

- ການໄປຍ່າງປ່າທຸກຄັ້ງ ຕ້ອງໄປກັບພະນັກງານນຳທ່ຽວ ທີ່ໄດ້ຮັບການຝຶກອົບຮົມ ແລະໄດ້ຮັບອະນຸຍາດຢ່າງເປັນທາງການເທົ່ານັ້ນ.
- ກະລຸນາຮັກສາບັດນີ້ໄວ້ຕິດຕົວ ເພື່ອການກວດກາ
- ກໍລະນີອຳນາດການປົກຄອງບ້ານຮຽກຮ້ອງ ຈົ່ງແຈ້ງບັດນີ້ໃຫ້ເຂົາເຈົ້າ ຊາບ.

ເພື່ອສະແດງຄວາມນັບຖືຕໍ່ວັດທະນະທຳອັນດີງາມຂອງທ້ອງຖິ່ນ, ກະລຸນາ:

- ຖາມພະນັກງານນຳທ່ຽວ ກ່ຽວກັບການປະພຶດຕົວ ທີ່ເໝາະສົມໃນ ໝູ່ບ້ານ.
- ບໍ່ຄວນເອົາສິ່ງຂອງ ຫຼື ຂອງຂວັນໃຫ້ຊາວບ້ານເປັນການສ່ວນຕົວ ເພາະເປັນການສົ່ງເສີມໃຫ້ມີການຂໍທານ.
- ຈົ່ງເຄົາລົບນັບຖືສະຖານທີ່ສັກສິດ ແລະຄວາມເຊື່ອຖືຂອງຊາວບ້ານ.
- ການເສບສິ່ງເສບຕິດ ເປັນສິ່ງຕ້ອງຫ້າມ ໃນ ສປປ.ລາວ

ທ່ານຈົ່ງຊ່ວຍປະກອບສ່ວນຫຼຸດຜ່ອນຜົນກະທົບຕໍ່ສະພາບແວດລ້ອມໂດຍວິທີ :

- ເກັບເອົາສິ່ງເສດເຫຼືອທີ່ທ່ານສ້າງຂຶ້ນ ກັບບ້ານໃຫ້ໝົດ
- ບໍ່ຊື້ ແລະ ບໍ່ກິນອາຫານ ທີ່ແຕ່ງດ້ວຍຊີ້ນສັດປ່າເປັນອັນຂາດ
- ກະລຸນາຊ່ວຍກັນປ້ອງກັນອັກຄີໄພ
- ຍ່າງທ່ຽວປ່າຕາມເສັ້ນທາງທີ່ກຳນົດໄວໃຫ້ເທົ່ານັ້ນ.

## ຄູ່ມືນ້ອຍວ່າດ້ວຍລຸກຂະຊາດ ແລະ ສັດທີ່ເຂດ ປສຊ ນ້ຳຫ້າ

ຄູ່ມືນີ້ ຈະພາທ່ານໄປຮູ້ຈັກຄຸ້ນເຄີຍກັບບັນດາປະເພດແນກໄມ້ ແລະ ສັດປ່າ ຊຶ່ງເປັນທີ່ຮູ້ຈັກໂດຍທົ່ວໄປໃນເຂດນີ້. ສ່ວນໜຶ່ງຂອງຈຳພວກທີ່ຫາຍາກ ຫຼື ສູນພັນໄປແລ້ວ ກໍໄດ້ນຳມາໄວ້ໃນນີ້ ຍ້ອນເຫັນວ່າ ມັນຄືງກຸ້ມຄ່າ ຫາການນຳມາກ່າວໃຫ້ພວກນັກທ່ອງທ່ຽວຟັງ. ຊື່ເປັນຄວາມລາວ ຊຽນເປັນໂຕງ່ຽງຢູ່ທາງ ໜ້າ ; ຊື່ວິທະຍາສາດ ຢູ່ຫຼັງເປັນໂຕງ່ຽງໃນວົງເລັບ. ສຳລັບຮູບຖ່າຍ ແລະ ຂໍ້ມູນເພີ່ມເຕີມນັ້ນ ໃຫ້ອີງ ໃສ່ບັນດາປື້ມຄູ່ມື ແລະ ປື້ມຄົ້ນຄວ້າ ຊຶ່ງກ່າວໄວ້ໃນບັນຊີ " *ບັນດາເອກະສານອ້າງອີງ ແລະ ແນະນຳ ໃຫ້ອ່ານ* " ຂອງບົດນີ້.

### ປ່າໄມ້ ແລະ ໝູ່ໄມ້ :

ເຂດນ້ຳຫ້າສ່ວນຫຼາຍເປັນປ່າຂອງ*ໝູ່ໄມ້ປະສົມ* ທີ່ຖ່າຍໃບເປັນສ່ວຍໃຫຍ່. ເພີ່ນເອີ້ນວ່າເປັນຕົ້ນໄມ້ *ຖ່າຍໃບ* ຫາກໃບເກົ່າຂອງມັນລົ່ນຖິ້ມ ແລະ ໃບໃໝ່ປົ່ງຂຶ້ນມາແທນທີ່ໜຶ່ງເທື່ອຕໍ່ປີເປັນຢ່າງໜ້ອຍ. ດັ່ງ ນັ້ນ, ປ່າໄມ້*ປະສົມທີ່ຖ່າຍໃບ* ແມ່ນປ່າໄມ້ທີ່ປະກອບດ້ວຍບັນດາປະເພດຕົ້ນໄມ້ ທີ່ປ່ຽນ ຖ່າຍໃບເປັນສ່ວນຫຼາຍ. ໃນເຂດນີ້ ກໍຫາກມີປ່າ*ເຄິ່ງຂຽວຕະຫຼອດ, ປ່າພູພຽງແຫ້ງແລ້ງທີ່ຂຽວຕະຫຼອດ* ແລະ *ປ່າດົງຊຸ່ມທີ່ຂຽວຕຫຼະອດ.* ກົກໄມ້<u>ຂຽວຕະຫຼອດ</u> ແມ່ນກົກໄມ້ທີ່ບໍ່ປ່ຽນຖ່າຍໃບຈັກເທື່ອ. ດັ່ງນັ້ນ, ປ່າໄມ້*ຂຽວຕະຫຼອດ* ຈຶ່ງແມ່ນປ່າທີ່ປະກອບດ້ວຍຈຳພວກຕົ້ນໄມ້*ຂຽວຕະຫຼອດ*ເປັນສ່ວນຫຼາຍ. ຈຳນວນໜຶ່ງ ຂອງປະເພດໄມ້ລຳຕົ້ນໃຫຍ່ທີ່ມີຢູ່ທົ່ວໄປໃນເຂດນີ້ ແມ່ນ : ໄມ້............. (Michelia Champka ), ໄມ້.................... ( Eugenia sp ), ໄມ້ຈວງຫອມ ( Mansoniagagei ), ໄມ້ກໍ່ ( Pometia pinnata ), ໄມ້ຫົກ ( Thyrostachys siamensis sp ) ແລະ ປະເພດໄມ້ປ່ອງສາລະພັດຢ່າງ. ຈຳພວກກົກໄມ້ລຳຕົ້ນ ໃຫຍ່ຍິ່ງອຸດົມສົມບູນ ແລະ ຕຶບໜາຫາກຍິ່ງຂຶ້ນສູ່ທີ່ສູງ. ຈຳພວກໄມ້ກໍ່ ( Pometia pinnata ), ແລະ ໄມ້ປ່ອງຊະນິດຕ່າງໆ ມັກພົບເຫັນຫຼາຍຕາມສັນ ແລະ ຈ້າຍພູ, ລຽບແຄມຝັ່ງຫ້ວຍນ້ຳລຳທານກໍມີພວກໄມ້ຕະກຸນໄມ້ໃຜ່, ຕົ້ນກວ້ຍ, ຕົ້ນຕາວ ຕົ້ນຄໍ້ ແລະ ສາລະພັດໄມ້ລຳຕົ້ນໃຫຍ່ເຊັ່ນກັນ.

## ເຄື່ອງປ່າຂອງດົງທີ່ບໍ່ແມ່ນໄມ້ທ່ອນ

ເຄື່ອງປ່າຂອງດົງທີ່ບໍ່ແມ່ນໄມ້ທ່ອນ ແມ່ນສິ່ງໃດສິ່ງໜຶ່ງ, ນອກເໜືອຈາກໄມ່ທ່ອນ, ທີ່ເກັບມາຈາກປ່າດົງເພື່ອຊົມໃຊ້ ຫຼື ຂາຍ ເຊັ່ນ : ເຮັດຮາກຢາ, ເຄື່ອງຫອມ ແລະ ເຮັດເຄື່ອງຫັດຖະກຳປະເພດນ້ອຍໆ. ເຄື່ອງປ່າຂອງດົງ ອາດເປັນແຫຼ່ງລາຍຮັບທີ່ສຳຄັນສຳລັບໝູ່ບ້ານທີ່ຢູ່ໃກ້ປ່າດົງ. ປ່າດົງເຂດນ້ຳຫ້າອຸດົມສົມບູນໄປດ້ວຍເຄື່ອງປ່າຂອງດົງ. ການຂຸດຄົ້ນເອົາເຄື່ອງປ່າຂອງດົງແບບຍືນຍົງ ໂດຍຊາວບ້ານໃນ ປສຊ ນ້ຳຫ້າ ໄດ້ຮັບການສົ່ງເສີມໃນຖານເປັນແຫຼ່ງສ້າງລາຍຮັບແບບຍືນຍົງຂອງພວກເຂົາເຈົ້າ ແລະ ເປັນລາງວັນຕອບແທນອັນສຳຄັນ ໃຫ້ແກ່ການອະນຸລັກປົກປ້ອງຊັບພະຍາກອນຕ່າງໆຂອງປ່າໄມ້. ເຄື່ອງປ່າຂອງດົງສຳຄັນຈຳນວນໜຶ່ງ ມີດັ່ງລຸ່ມນີ້ :

***ຫວາຍ*** - Rattan ( Calammus & Daemonorops ) ໝາກຂອງມັນສົ່ງຂາຍໄປຕະຫຼາດຈີນ ເພື່ອເຮັດຢາ. ລຳຕົ້ນຂອງມັນໃຊ້ເຮັດສາລະພັດເຄື່ອງຫັດຖະກຳຈັກສານ ເຊັ່ນ: ກະຊ້າ ແລະ ໂຕະ ຕັ່ງ ຕຽງ. ໜໍ່ຂອງມັນ ມັກໃຊ້ກິນເປັນອາຫານ, ເຊັ່ນ: ເຮັດແຈ່ວ ຫຼື ໃສ່ເອາະ ໃສ່ແກງຕ່າງໆ.

*ໝາກແນ່ງ* - Cardamom ( Amomum spp ) ໝາກຂອງມັນ ໃຊ້ເຮັດຢາຢູ່ໃນທ້ອງຖິ່ນເອງ ແລະ ຍັງ ສົ່ງຂາຍໃຫ້ຕະຫຼາດການຢາຂອງຈີນ. ມັນຍັງຖືກນຳໃຊ້ເພື່ອເຮັດເຄື່ອງຫອມ ເພື່ອປຸງລົດອາຫານ, ມີ ລາຄາສູງໃນບັນດາປະເທດຢູຣົບ. ພືດຊະນິດນີ້ມີຫຼາຍສົມຄວນໃນບາງເຂດ.
*ໜໍ່ໄມ້* - Bamboo shoots – ໜໍ່ໄມ້ຂອງໄມ້ປ່ອງຊະນິດຕ່າງໆ ໃຊ້ເພື່ອກິນ ແລະ ຂາຍໃນຕະຫຼາດ ທ້ອງຖິ່ນ. ເຄື່ອງປ່າຂອງດົງປະເພດນີ້ ມີຫຼາຍທີ່ສຸດ.

*ດອກເຜິ້ງ ງ່າໃບຫຼາຍ* jewel orchid ( Amoetochilis Roxburghii ) -ອີງຕາມຂໍ້ກຳນົດກົດລະບຽບຂອງແຂວງ, ທຸກການຂຸດຄົ້ນ ແລະ ຂາຍຕົ້ນດອກເຜິ້ງຊະນິດນີ້ ລ້ວນແຕ່ເປັນການກະທຳຜິດ. ຢ່າງໃດກໍດີ, ຍ້ອນລາຄາມັນແພງຫຼາຍ ຈິ່ງອາດມີການລັກລອບສົ່ງອອກໄປຂາຍໃນຕະຫຼາດການຢາຂອງຈີນ.

*ໄມ້ເກດສະໜາ* - Eaglewood (Aquilaaria Crassna)- ເຄື່ອງປ່າຂອງດົງຊະນິດນີ້ ລາຄາແພງເປັນທີ່ສຸດ ແລະໃຊ້ເພື່ອເຮັດນ້ຳຫອມ. ການຂຸດຄົ້ນໄມ້ເກດສະໜາ ເປັນການຜິດກົດໝາຍຢູ່ໃນ ປສຊ ນ້ຳຫ້າ ແລະ ຖືກເກືອດຫ້າມໃນຫຼາຍໆເຂດ ຂອງ ສປປ.ລາວ.

*ເປືອກເມືອກ* Tree bark ( Cinnamomum Cassia ) ຖືກນຳໃຊ້ເຂົ້າໃນການເຮັດນ້ຳຫອມ ແລະ ເປັນແຫຼ່ງອ່າວໃຫຍ່ ຫຼື ໃຫຍ່ກວ່າໝູ່ ເພື່ອສ້າງລາຍຮັບ ສຳລັບບາງບ້ານີ່ຢູ່ໃນ ປສຊ ນ້ຳຫ້າ.

## ສັດລ້ຽງລູກດ້ວຍນົມ

ສັດລ້ຽງລູກດ້ວຍນົມ ເປັນສັດເລືອດອຸ່ນ ມີກະດູກສັນຫຼັງ, ມີຂົນ ຫຼື ຜົມ, ສາມາດອອກລູກ ແລະ ລ້ຽງລູກນ້ອຍດ້ວຍນ້ຳນົມຂອງຕົນ. ມະນຸດ, ລີງ, ລິ່ນ, ໜູພຸກ, ລິ່ງ, ເຈຍ, ໝາ, ໝີ, ງົວ, ຄວາຍ, ເສືອໂຄ່ງ, ກວາງ, ໝູປ່າ, ກະຕ່າຍ, ກະຮອກ ແລະ ອີກຫຼາຍໆສັດ ລ້ວນແຕ່ເປັນສັດລ້ຽງລູກດ້ວຍນົມ. ຈຳນວນນົກບໍ່ແມ່ນພວກສັດລ້ຽງລູກດ້ວຍນ້ຳນົມ ເພາະພວກມັນຟັກໄຂ່ ແລະ ມີປີກ, ຫາກບໍ່ແມ່ນມີຂົນ; ຈຳ ພວກງູ, ເຕົ່າ ແລະ ຕະກູນກະປອມ ກໍບໍ່ແມ່ນຄືກັນ ເພາະພວກມັນຟັກໄຂ່, ເລືອດເຢັນ ແລະບໍ່ມີຂົນ.

## ເຮັດແນວໃດ ຈິ່ງຈະເຫັນສັດປ່າ ທີ່ລ້ຽງລູກດ້ວຍນົມ

ສັດລ້ຽງລູກດ້ວຍນ້ຳນົມ ສ່ວນຫຼາຍຈະຫາເບິ່ງຍາກ ຍ້ອນຖືກລ່າຫຼາຍ. ກະຮອກມັກສົ່ງສຽງດັງ ໃນເວລາມັນເຄື່ອນຍ້າຍຈາກງ່າໄມ້ນີ້ໄປຫາງ່າໄມ້ອື່ນ ຫຼື ເວລາມັນແລ່ນໄປຕາມໃບໄມ້ແຫ້ງຢູ່ໜ້າດິນ. ລີງ ແລະ ກວາງ ອາດເປັນທີ່ພໍຈອບເບິ່ງໄດ້ໃນຕອນເຊົ້າໆ ຫຼື ຕອນແລງໆ. ຫາກລ່ອງເຮືອ ຫຼື ແພລົງໄປຕາມລຳ ນ້ຳຫ້າ, ບາງທີທ່ານອາດມີໂອກາດດີຫາຍາກ ເພື່ອເຫັນສັດປ່າທີ່ລ້ຽງລູກດ້ວຍນົມໂຕໃຫຍ່ໆ ເຊັ່ນ: ເສືອດາວ, ໝີ, ໝູປ່າ ທີ່ອາດສາມາດພົບເຫັນໄດ້ງ່າຍກວ່າໝູ່ - ຫາກທ່ານມີຄວາມກ້າຫານພໍ ເພື່ອນຳຮອຍ ຫຼື ສິ່ງບົ່ງບອກອື່ນໆ ຂອງພວກມັນ ເຊັ່ນວ່າ ຮອຍເລັບຂູດຕາມຕົ້ນໄມ້ເປັນຕົ້ນ. ຝູງເຈຍ ອາດສາມາດພົບເຫັນໄດ້ໃນຕອນແລງຄ້າຍຄ່ຳ ຫຼື ແຕ່ເຊົ້າໆ, ແຕ່ຈະເບິ່ງພວກມັນອອກຍາກໃນເວລາພວມບິນ.
**ບາງປະເພດສັດລ້ຽງລູກດ້ວຍນ້ຳນົມ ທີ່ອາດພົບເຫັນໃນເຂດນີ້:**

ຕາມລາຍງານທີ່ໄດ້ຮັບ, ບັນດາສັດປ່າໃນບັນຊີລາຍຊື່ຢູ່ລຸ່ມນີ້ ເປັນຈຳພວກທີ່ມັກພົບພໍ້ຢູ່ເລື້ອຍໆໃນແຖບນີ້. ຢ່າງໃດກໍຕາມ, ໃນຄວາມເປັນຈິງແລ້ວຄວາມຫຼາກຫຼາຍຂອງມັນ ອາດມີສ່ວນຖືກຈຳກັດ ແລະ ອາດເຫັນໄດ້ຍາກ ( ເຖິງວ່າບໍ່ເຖິງຂັ້ນ ຄືຈຳພວກທີ່ຢູ່ໃນປະເພດຖືກນາບຂູ່ໃຫ້ສູນພັນກໍດີ ).

*ໜູຂີ* - Hory Bamboo Rat ( Rhizomys pruinosus )- ໜູຂີຊະນິດນີ້ ມັກລີ້ຊ້ອນຢູ່ຕາມສຸມໄມ້ປ່ອງໃນປ່າດົງເຂດພູພຽງ ແລະ ພູດອຍ. ພວກມັນມັກຢູ່ໃຕ້ດິນໃນຕອນກາງເວນ ແລະ ອາໃສກິນໜໍ່ໄມ້, ແກ່ນພືດໄມ້ ແລະ ໝາກໄມ້ປ່າຕ່າງໆ.

*ກະຮອກ* - Pallas's Squirrel ( Callosciurus erythraeus )- ເຮັດຮັງໃນໂກນໄມ້ - ກິນສາລະພັດ ໝາກໄມ້, ແກ່ນພືດຕ່າງໆ, ດອກໄມ້ຕ່າງໆ, ໜໍ່ແລະແໜງໄມ້, ໃບໄມ້, ເປືອກໄມ້,ແມງໄມ້ຕ່າງໆ.

*ກະໄບ່ແກ້ມແດງ* - Red-cheeked Squirrel ( Dremomys rufigenis )- ກິນສະເພາະໝາກໄມ້, ແກ່ນພືດໄມ້ຕ່ງໆ, ແມງໄມ້ ແລະ ຂີ້ກະເດືອນ. ກະຮອກຊະນິດນີ້ ອາໃສຢູ່ຕາມໜ້າດິນເປັນຕົ້ນຕໍ.

*ເໝັ້ນ* - Hodgson's porcupine ( Hystrix Brachyura )- ອາໃສຢູ່ໃຕ້ດິນ, ລີ້ຊ່ອນຢູ່ໃຕ້ດິນ. ກິນຮາກໄມ້, ຫົວມັນຕ່າງໆ, ເປືອກໄມ້ ແລະ ໝາກໄມ້ຫຼົ່ນບາງຊະນິດ.

*ຈອນຟອນ* - Yellow-Throated Marten ( Martes flavigula )- ເຄື່ອນໄຫວຫ້າວຫັນຕອນກາງເວັນ. ສາມາດພົບເຫັນໃນປ່າທຸກປະເພດ. ກິນໝາກໄມ້, ແມງໄມ້, ໄຂ່, ນົກ, ກະຮອກ, ກົບ, ໆລໆ.

*ໝູປ່າ* - Eurasian wild pig ( Sus serofa )- ໝູປ່າເປັນບັນພະບູລຸດຂອງໝູບ້ານ, ກິນໝາກໄມ້ຫຼົ່ນ, ຮາກໄມ້ບາງຊະນິດ, ຫົວມັນ ແລະ ໄນໝາກໄມ້. ໂຕແມ່ເລີ່ມສືບພັນ ຫຼັງຈາກອາຍຸແປດເດືອນ; ຖືພາໜຶ່ງປີ ແລະ ອາດອອກລູກເຖິງແປດໂຕແຕ່ລະເທື່ອຄອດ. ອາດຕົກເປັນເຫຍື່ອຂອງເສືອດາວ, ເສືອໂຄ່ງ ແລະ ງູຫຼາມ.

*ຟານ* - Indian Muntjac ຫຼື Barking deer ( Rhizomys pruinosus )- ພາສາອັງກິດເອີ້ນວ່າ " ກວາງຮູ້ເຫົ່າ " ເພາະວ່າມັນຈະຮ້ອງເຫົ່າເວລາມັນຕື່ນຕົກໃຈ ຫຼື ພົບອັນຕະລາຍ. ມັນມີເຂົາສັ້ນ. ສາມາດພົບເຫັນໃນກາງເວັນ ແລະ ອາດໃນກາງຄືນນຳ. ກິນໃບໄມ້ ແລະ ໃບຫຍ້າອ່ອນ, ໝາກໄມ້ຫຼົ່ນ ແລະ ເມັດພືດຈຳນວນໜຶ່ງ. ມັກຖືກໄລ່ລ່າໂດຍເສືອດາວ, ເສືອໂຄ່ງ ແລະ ງູເຫຼືອມໃຫຍ່. ມັກປະສົມພັນລະຫວ່າງເດືອນທັນວາ - ມັງກອນ ແລະ ອອກລູກໃນທົກເດືອນຕໍ່ມາ.

## ບາງສັດລ້ຽງລູກດ້ວຍນົມ ຊະນິດທີ່ຫາຍາກ ແລະ ພໍມີໃຫ້ເຫັນໃນເຂດນີ້.

ທີ່ ປສຊ ນ້ຳຫ້າ ມີສັດລ້ຽງລູກດ້ວຍນ້ຳນົມ 21 ຊະນິດ ຖືກຈົດເຂົ້າໃນບັນຊີລາຍຊື່ຂອງປະເພດສັດສຳຄັນທີ່ເປັນເປົ້າໝາຍບູລິມະສິດຂອງການອະນຸລັກປົກປ້ອງ ( ເບິ່ງບົດ 3 ເພື່ອຮູ້ຄຳນິຍາມຂອງປະເພດ ສຳຄັນ ). ທ່ານອາດຈະບໍ່ເຄີຍເຫັນສັດປະເພດນີ້ດ້ວຍຕົນເອງ. ຫາກທ່ານໂຊກດີພໍ, ທ່ານອາດຈະໄດ້ ເຫັນຮ່ອງຮອຍແນວໃດໜຶ່ງຂອງພວກມັນ. ຢ່າງໃດກໍດີ, ມັນມີຄວາມສຳຄັນ ແລະ ເປັນໜ້າຍິນສະອອນ ໃຈທີ່

ຈະສະເໜີແນະນຳສັດຈຳພວກນີ້ ໃຫ້ພວກນັກທ່ອງທ່ຽວຊາບນຳ. ໃຫ້ດີແທ້, ຄວນຂໍໃຫ້ຊາວບ້ານ ຊ່ວຍແບ່ງປັນຄວາມຮູ້ຂອງພວກຕົນ ກ່ຽວກັບປະເພດສັດທີ່ຖືກນາບຂູ່ນີ້ ໃຫ້ພວກນັກທ່ອງທ່ຽວຕື່ມ. ບາງຈຳນວນຂອງພວກສັດຫາຍາກ ແລະ ຖືກນາບຂູ່ເທົ່າທີ່ເຫັນຢູ່ໃນແຖບນີ້ ແມ່ນເສືອໂຄ່ງ, ຊ້າງ, ກະທິງ, ໝີດຳ, ລີງກັງ, ເສືອດາວ ແລະ່ - Sambar ( Cervus unicolor )

## ບາງສັດລ້ຽງລູກດ້ວຍນົມທີ່ອາດຈະບໍ່ເຫຼືອລອດອີກຕໍ່ໄປໃນເຂດນີ້

ສັດລ້ຽງລູກດ້ວຍນ້ຳນົມບາງຊະນິດ ຊຶ່ງເຄີຍຢູ່ອາໃສ ໃນ ປສຊ ນ້ຳຫ້າ ມາແຕ່ໃດໆ ອາດຈະບໍ່ເຫຼືອໃຫ້ເຫັນອີກໃນອະນາຄົດໃກ້ໆນີ້ ຍ້ອນຖືກຍິງ ຂ້າ ແລະ ຍ້ອນສູນເສຍທີ່ຢູ່ອາໃສ. ກ່ອນອື່ນ ແມ່ນສອງ ປະເພດສັດ, ກ່າວຄື : ***ທະນີ*** - Gibbon ( Hylobates sp ) ***ແລະ ແຮດ*** - Javan / Sumatran Rhinoceros ( Rhinoceros Sondaicus / Dicerorhinos Sumatrensis ). ຈຳພວກອື່ນໆທີ່ຖືກນາບຂູ່ ປັດຈຸບັນຢູ່ໃນເຂດນີ້ ກໍພວມປະເຊີນກັບຊາຕາກຳອັນດຽວກັນ ກັບທະນີ ແລະ ແຮດ ຖ້າວ່າພວກເຮົາບໍ່ ຢຸດເຊົາການລ່າສັດ ແລະ ບໍ່ປົກປ້ອງແຫຼ່ງທີ່ຢູ່ອາໃສຂອງພວກມັນ ຈາກການຖືກທຳລາຍ.

## ສັດເລືອຄານ

*ສັດເລືອຄານ* ເປັນພວກສັດທີ່ມີກະດູກສັນຫຼັງແລະີເລືອດເຢັນ, ບໍ່ມີຂົນ ຫຼື ຜົມ, ແລະ ຝັກໄຂ່. ງູ, ເຕົ່າ, ແຂ້, ເຫ້ຍ-ແລນ, ກະປອມ, ແມ່ນຈຳພວກສັດເລືອຄານ. ນົກຕ່າງໆ ບໍ່ແມ່ນສັດເລືອຄານ ເພາະພວກມັນເລືອດອຸ່ນ ແລະ ມີປີກ.

### ຈະຫາເບິ່ງສັດເລືອຄານໄດ້ຄືແນວໃດ ?

ງູ ບາງຊະນິດ ມັກຢູ່ບ່ອນແຫ້ງ, ເຊັ່ນ: ຢູ່ເທິງຟຸ່ມໄມ້ໃນປ່າ. ຈົ່ງຟັງດີໆ ທ່ານສາມາດໄດ້ຍິນສຽງແລ່ນເລືອໄປຕາມໃບໄມ້ແຫ້ງໃນປ່າ ຫຼື ລຽບທາງຍ່າງ. ງູ ຍັງເປັນທີ່ພົບເຫັນໄດ້ຢູ່ໃກ້ໆໜອງນ້ຳ ຫຼື ລຽບແຄມຫ້ວຍນ້ຳ, ບ່ອນທີ່ພວກມັນອາດມາໄລ່ລ່າກິນກົບ, ຂຽດ. ໂຕກະປອມ ມັກພົບເຫັນຢູ່ຕາມລຳຕົ້ນຂອງກົກໄມ້, ເວລາຕື່ນຢ້ານພວກມັນມັກແລ່ນຂຶ້ນໄປຕາມດ້ານຫຼັງຂອງຕົ້ນໄມ້ສະເໝີ. ເຕົ່າມັກຢູ່ເລາະລຽບ ແຄມຝັ່ງນ້ຳ ແລະ ມັກລີ້ງສຽງດັງເວລາລົງນ້ຳ.

## ສັດເລືອຄານຈຳນວນໜຶ່ງ ທີ່ອາດເຫັນໃນເຂດນີ້.

**<u>ພວກງູພິດ :</u>**

ງູ.ເຫົ່າຫ້ອມ (?) ....... White - lipped pit viper ( *Trimeresurus albolabris* )- ອາດພົບເຫັນ ໃນບ່ອນໂລ່ງແຈ້ງ ແຖບຊົນນະບົດ ແລະ ຮອດໃນເຂດກາງເມືອງເອງກໍມີ. ກິນໜູ, ກົບຂຽດ, ນົກ ແລະ ກະປອມ - ມີພິດ ຮ້າຍແຮງທີ່ສຸດ. ເປັນຕົວການຕອດຄົນມາຫຼາຍ.

ງເຜົາກະບາູ(?)........ Banded krait ( *Burgarus fasciatus* )- ຢູ່ບ່ອນແຫ້ງໃນປ່າເຂດດິນຕ່ຳ. ກິນກະກອມ, ງູ ແລະ ສັດລ້ຽງລູກດ້ວຍນ້ຳນົມໂຕນ້ອຍໆ. ໄປມາຊ້າ ແຕ່ອັນຕະລາຍເຖິງຕາຍ.

ງູທາມທານ.(?)....... _Red-neeked Keelback ( *Rhabdophis Subminiatus* )- ມັກຢູ່ປ່າຊຸ່ມປຽກ. ກິນກົບຂຽດ ແລະ ຄັກຄາກ. ເປັນອັນຕະລາຍ.

**<u>ງູບໍ່ມີພິດ :</u>**

ງູປາ Stiped Water Snake ( *Enhydris jagorii* )- ເຄື່ອນໄຫວຫາກິນກາງເວັນ. ຢູ່ຕາມຫ້ວຍຮ່ອງໜອງບຶງ.

ງູ........ Chequered Keelback ( *Xeno – chrophis piscator* )- ຫາກິນທັງເວັນແລະຄືນ. ສາມາດຕອດແຕ່ບໍ່ເປັນອັນຕະລາຍ. ຢູ່ໃກ້ຫ້ວຍ, ໜອງ ແລະ ນາເຂົ້າທີ່ມີນ້ຳ.

ງູດາງແຫ Striped Kelback ( *Amphiesma stolata* )- ເຄື່ອນໄຫວກາງເວັນ. ພົບເຫັນຕາມທົ່ງ ພຽງທີ່ມີນ້ຳ, ກິນກົບຂຽດ ແລະ ຄັນຄາກ.

ງູສິງ Indo-chinese Rat snake ( *Ptyas korros* )- ເຄື່ອນໄຫວກາງເວັນ. ຢູ່ປ່າ ແລະ ດິນກະສິກຳ. ກິນໜູ ແລະ ກົບຂຽດ.

ງູສິງດົງ Wolf snake ( *Lycodon capucinas* )- ມັກຢູ່ບ່ອນແຫ້ງ ແລະ ດິນກະສິກຳ. ກິນກັບແກ້, ກະປອມ ແລະ ກົບຂຽດ.

**<u>ກະປອມ ແລະ ກັບແກ້</u> :**

**ໂຕກັບແກ້** ກິນແມງໄມ້ ແລະ ສາມາດເຫັນຢູ່ອ້ອມເຮືອນ, ເທິງກົກໄມ້ ແລະ ຕາມຜາຫີນໃນຍາມກາງຄືນ. ຢູ່ເຂດນີ້ ມີໂຕກັບແກ້ຢູ່ສາມປະເພດ ຄື: ກັບແກ້ດົງ Tockay ( Gecko geeko ) , ກັບແກ້ຜາ - Garnot's gecko ( Hemidactybus gamotii ) ແລະ ກັບແກ້ເຮືອນ - spiny-tailed house Gecko ( Hemidactybus frenatus ) .

**ກະປອມ** -Horned Tree lizard ( Acanthosaura armata ) , ມັກເຫັນຢູ່ຕາມກະຕໍໄມ້, ງ່າໄມ້ຕ່ຳໆ ໃນປ່າ ແລະ ອ້ອມບ້ານ. ກິນແມງໄມ້ ແລະ ຂີ້ກະເດືອນ.

**ຈີໂກະ** - Garden fence lizard ( *Calotes versicolor* ) , ອາໄສຢູ່ສະເພາະໃນປ່າຫຍ້າ, ຫຼືບໄມ້ ແລະ ໃຕ້ດິນ ໃນສວນ ແລະ ເຂດປູກຝັງ. ກິນແມງໄມ້ ແລະ ສັດນ້ອຍໆ.

**ກະທ້າງ** - Five – banded Gliding lizard ( *Draco quinquefasiatus* ) , ມັກຢູ່ປ່າດົງຂຽວຕະຫຼອດ ແລະ ໃນເຂດມີຫ້ວຍນ້ຳທາມບຶງ. ກິນມົດ, ປວກ ແລະ ແມງໄມ້ອື່ນ ).

<u>ເຕົ່າຕ່າງໆ :</u>

***ເຕົ່າກຸຍ*** - Big-headed turtle ( *Platysternon megacephalum* ), ເຫັນມີຕາມຫ້ວຍນ້ອຍ. ມັກລີ້ຊ່ອນຢູ່ຕາມຫຼືບຫີນໃນຍາມກາງເວັນ. ກິນຫອຍ ແລະ ກົບຂຽດ.

*ເຕົ່າ..........* Red-eared Terrapin ( *Trachemys scripta elegans* ), ອາດສາມາດເຫັນຕາມບ່ອນແຫ້ງໃນຫຼືບໂງ່ນຫີນແຄມຝັ່ງຫ້ວຍນ້ຳລຳເຊ ແລະ ເຂດໃກ້ຄຽງ.

*ເຕົ່າຫົກ* - Brown Asian Giant Tortoise ( *Manouria emys emys* ), ພົບເຫັນໃນປ່າດົງຊຽວ ຕະຫຼອດ. ກິນພືດ, ໝາກໄມ້ຫຼົ່ນ ແລະ ເຫັດ.

### ສັດເລືອຄານຈຳນວນໜຶ່ງ ທີ່ຖືກນາບຊູ່ :

*ແຂ້..........* ( *Crocodylus Siamesis* )
*ງູເຫຼືອມ........* ( *Python reticulatus* )

### *ນົກ :*

ນົກຕ່າງໆເປັນຈຳພວກສັດປີກເລືອດອຸ່ນ ທີ່ຂະຫຍາຍພັນດ້ວຍການຟັກໄຂ່. ບໍ່ແມ່ນສັດມີປີກທຸກຊະນິດຈະເປັນນົກ ແລະ ສັດມີປີກທັງຫຼາຍບໍ່ແມ່ນຊິບິນໄດ້ທຸກໂຕ. ເຈຍ, ຕົວຢ່າງ, ກໍ່ມີປີກ ແລະ ບິນເກັ່ງ ແຕ່ ບໍ່ຖືເປັນນົກ ເພາະພວກມັນບໍ່ມີຂົນ, ບໍ່ຟັກໄຂ່ ແຕ່ຫາກລ້ຽງລູກດ້ວຍນົມ. ນົກປິນກວິນ ຫຼື ຄີວີ, ພົບເຫັນຕາມທະເລ ປະເທດນິວຊີແລນ ແລະ ແຫ່ງອື່ນໆໃນໂລກ, ລ້ວນແຕ່ມີປີກ ແຕ່ພັດບິນບໍ່ໄດ້. ຢູ່ທີ່ ປສຊ ນ້ຳຫ້າ ເພິ່ນສຳຫຼວດເກັບກຳຈຳພວກນົກຕ່າງໆໄດ້ 288 ຊະນິດ. ການໄປເບິ່ງນົກ ເປັນການເຄື່ອນໄຫວທີ່ນິຍົມຊົມຊອບຫຼາຍທີ່ສຸດ ຂອງພວກນັກທ່ອງທ່ຽວທຳມະຊາດ ແລະ ຈາກນັ້ນ, ສາມາດມີບົດບາດສຳຄັນຍິ່ງໃນເສັ້ນທາງຍ່າງທ່ອງທ່ຽວຊົມທຳມະຊາດຂອງທ່ານ.

### ຈະຫາເບິ່ງນົກໄດ້ຄືແນວໃດ

ການທ່ຽວປ່າໂດຍທາງເຮືອແພ ໃຫ້ໂອກາດດີເພື່ອຊົມນົກ. ນາເຂົ້າ, ເປັນຕົ້ນແມ່ນລຸນຫຼັງການເກັບກ່ຽວ ແລະ ປ່າດົງ ແລະ ປ່າແຮ່ວ ຂອງຊຸມຊົນຊາວບ້ານ ກໍສາມາດໃຫ້ໂອກາດດີເພື່ອຊົມນົກຄືກັນ. ຍາມເຊົ້າໆ ( ຍາມອາລຸນເບີກຟ້າ ) ແມ່ນເວລາດີທີ່ສຸດ ສຳລັບການຊົມນົກ. ຈົ່ງໃຊ້ຫູຟັງເພື່ອຊອກຫານົກ; ພວກນົກມັກຂີ້ອາຍ, ແຕ່ຖ້າວ່າທ່ານຍອມອົດທົນ ແລະ ມີຄູ່ຫູດີ, ມີກ້ອງຊ່ອງຊ່ວຍ ທ່ານຈະໄດ້ເຫັນນົກຢ່າງແນ່ນອນ.

### ນົກທີ່ພົບເຫັນໃນແຖບນີ້

ບັນຊີລາຍຊື່ລຸ່ມນີ້ ບໍ່ສົມບູນຄົບຖ້ວນ ແຕ່ຫາກພໍສາມາດຊ່ວຍແນະນຳທ່ານໃຫ້ຮູ້ຈັກກັບບັນດາປະເພດນົກທີ່ມັກພົບເຫັນໃນເຂດນີ້. ສຳລັບຮູບພາບ ແລະ ຂໍ້ມູນຂ່າວສານລະອຽດຕ່າງໆ, ຈົ່ງເບິ່ງ " ຄູ່ມືກ່ຽວກັບນົກ ທີ່ປະເທດໄທ " *ແລະ* " ຄູ່ມືພາບຖ່າຍນົກ ທີ່ປະເທດໄທ ".

*ນົກຄໍ່........* - Bar-backed Partridge ( *Arborophila brunneopectus* )
*ນົກ.ເຄົ້າ.......* - Red junglefowl ( *Gallus gallus* )
***ໄກ່ຂວາໝົ່ນ*** - Grey Peacock Pheasant ( *Polyplectron* ) - ປະເພດສຳຄັນ.
***ໄກ່ຂວາເງິນ*** - Silver Pheasant ( *Cophura nycthemera* ) - ປະເພດສຳຄັນ.
***ນົກຫອນຂວັນ*** - Oriantal Pied Hornbill ( *Anthracoceros albirostris* )

…………. – Great Barbet ( *Megalaima virens* )
*ນົກເຕັນຄໍຂາວ* -White – Thoated Kingfisher ( *Halcyon smyrnesis* )
*ນົກເຕັນຫອນດໍາ* - Black – Capped Kingfisher ( *Halcyon Pileata* )
…………. –Hawk Cuckoo ( *Cuculus sparverioides* )
…………. –Fork-tailed Swift ( *Spus pacificus* )
…………. –Mountain Scoops Owl ( *Otus spilocephalus* )
…………. –Crested Serpent Eagle ( *Spilornis cheela* )
…………. –Spotted Dove ( *Streptopelia chinensis* )
…………. –Chinese Pond Heron ( *Ordeola bacchus* )
…………. –Thick-billed Green Pigeon ( *Treron curvirostra* )
…………. –Long-tailed Broadbill ( *Psarisomus dalhousiae* )
…………. –Scarlet Minivet ( *Pericrocotu flammeus* )
…………. –Ashy Drongo ( *Dicrurus leucophaeus* )
…………. –Common Stonechat ( *Saxicola torquata* )
…………. –Velve-fronted Nuthatch ( *Sitta frontailis* )
ນົກແອ່ນ… - Barn Swallow ( *Hirundo Rustica* )
…………. – White Wagtail ( *Motacilla alba* )
…………. –Striated Yuhin ( *Yuhina castaniceps* )
…………. –Striped Tit Babbler ( *Macronous gularis* )

# ປະວັດສາດຫຼວງນ້ຳທາ

**<u>ຍຸກຫີນຕົ້ນ</u>**

ມັນເປັນເລື່ອງຍາກທີ່ຈະສືບສາວກວດກາເບິ່ງການເຄື່ອນໄຫວຂອງມະນຸດໃນຍຸກຫີນຕົ້ນ ຢູ່ທີ່ຫຼວງນ້ຳທາ, ເພາະວ່າເທົ່າທີ່ເປັນຢູ່ເພິ່ນບໍ່ທັນພົບເຫັນຮ່ອງຮອຍທາງໂບຮານຄະດີອັນແຈ່ມແຈ້ງເທື່ອ. ແຕ່ຢ່າງໃດກໍຕາມ, ບາງທີຍຸກສະໄໝນັ້ນ ອາດສາມາດເປັນທີ່ເຂົ້າໃຈໄດ້ດີກວ່າ ຖ້າວ່າ, ໃນອານາຄົດຕໍ່ໜ້າ, ນັກປະວັດສາດຂອງແຂວງ ແລະ ນັກໂບຮານຄະດີ ຫາກສາມາດໄປທຳການຄົ້ນຄວ້າເບິ່ງຖ້ຳຕ່າງໆ ຢູ່ ທີ່ວຽງພູຄາ ແລະ ທີ່ພູພຽງ ເມືອງນານ.

**<u>ຍຸກຫີນກາງ ເຖິງຍຸກຫີນໃໝ່</u>** ( ແຕ່ 10.000 - 2300 ປີ ກ່ອນຍຸກປັດຈຸບັນ )

ຮ່ອງຮອຍເສດເຫຼືອຂອງມະນຸດ ( ຄົນສະໄໝດຶກດຳບັນ ) ໄດ້ຖືກຄົ້ນພົບໃຕ້ເງິບຫີນ ແລະ ໃນຖ້ຳຫຼາຍແຫ່ງ ທີ່ວຽງພູຄາ, ເມືອງສິງ ແລະ ເມືອງລອງ. ເມື່ອເອົາເສດກະດູກເຫຼົ່ານັ້ນ ໄປທຽບໃສ່ເສດກະດູກທີ່ ຄົ້ນພົບ ທີ່ແຂວງນ່ານ ຂອງປະເທດໄທ, ມີສິ່ງກະຕຸ້ນໃຫ້ເຊື່ອໝັ້ນໄດ້ວ່າ ໃນ " ຍຸກສະໄໝຫີນກາງ " ມະນຸດໄດ້ເຂົ້າມາຢູ່ພາກເໜືອຕອນບົນຂອງແມ່ນ້ຳຂອງແລ້ວ, ສະເພາະຢ່າງຍິ່ງທີ່ຫຼວງນ້ຳທາ.

ພວກນັກພາສາສາດ ເຊື່ອວ່າພວກເຜົ່າຊົນທີ່ປາກພາສາໃນຕະກຸນ ໂອສໂຕຣ - ເອເຊຍ ( Austro - Asiatic ) ເຂົ້າມາປະກົດຕົວໃນພາກພື້ນອາຊີອາຄະເນໄດ້ປະມານແຕ່ 5.000 ເຖິງ 7.000 ປີແລ້ວ. ເພິ່ນໄດ້ພົບເຫັນຊາກເສດທາງບູຮານຄະດີ ຂອງຍຸກສະໄໝດຽວກັນນີ້ ຢູ່ທີ່ເຂດໜຶ່ງ ຊຶ່ງປາງກ່ອນເອີ້ນ ວ່າເມືອງວຽງຮອັກ ( ຢູ່ຕອນເໜືອເມືອງຫຼວງນ້ຳທາຂຶ້ນໄປ ປະມານ 30 ກິໂລແມັດ ) ແລະ ຢູ່ເມືອງ ນານ. ເຊື່ອກັນວ່າ ເມື່ອ 6.000 ປີກ່ອນຄຣິດຕະສັກກະລາດ ( 8.000 ປີ ມາແລ້ວ ) ພວກເຜົ່າຊົນເຫຼົ່ານັ້ນ ຮູ້ລ້ຽງສັດແລ້ວ, ແລະ ອາດຮູ້ເຮັດການປູກຝັງນຳ ກໍເປັນໄດ້.

ແຫຼ່ງອະລິຍະທຳຍຸກຫີນດຶກດຳບັນອັນລືຊື່ແຫ່ງໜຶ່ງ ໄດ້ຖືກຄົ້ນພົບທີ່ສາຍພູຄະນຶງສິນໄຊ ຢູ່ເມືອງນານ. ສະຖານທີ່ແຫ່ງນີ້ ມີບັນດາຫີນຕັ້ງ ແລະ ຫີນສີລາເລກ ທີ່ສະຫຼັກຮູບພາບໃສ່ຫຼາຍໆອັນ. ສິ່ງກໍ່ສ້າງຄ້າຍ ຄືກັນນີ້ ກໍ່ຖືກພົບເຫັນທີ່ເມືອງເປີນ, ຫົວພັນ; ທັງສອງແຫ່ງຄືຈັ່ງວ່າປະກົດເກີດໃນໄລຍະດຽວກັນ. ຈຳພວກຫີນຮູບໂຕະ ກໍພົບເຫັນຢູ່ນີ້. ເຖິງວ່າບໍ່ແນ່ໃຈ,ແຕ່ບັນດານັກຄົ້ນຄວ້າກໍ່ສ່ຽງບົ່ງຊີ້ໄປວ່າ ປ່າເສົາຫີນ ຢູ່ແຂວງຫົວພັນ ມີອາຍຸປະມານ 500 ປີກ່ອນຄຣິດຕະສັກກະລາດ (2500 ປີມາແລ້ວ). ໄດ້ມີຜູ້ລົງຄວາມເຫັນວ່າ ສິ່ງກໍ່ສ້າງເຫຼົ່ານີ້ ອາດເກີດກ່ອນຂຸມໄຫຫີນໃຫຍ່ ທີ່ທົ່ງໄຫຫີນ ແຂວງຊຽງຂວາງ.

**<u>ໄລຍະປະວັດສາດດັ້ງເດີມ.</u>**

ບັນດາວັດທະນະທຳ ແລະ ອາລິຍະທຳຂອງກຸ່ມຕະກູນໂອສໂຕຣ-ເອເຊຍ ໄດ້ແຜ່ຂະຫຍາຍໃນອາຊີ ອາຄະເນ ປະມານແຕ່ 300 - 1000 ປີ ກ່ອນຄຣິດຕະສັກກະລາດ (2300 - 2100 ປີກ່ອນນີ້). ຈົນມາເຖິງສະຕະວັດທີ 8, ອີງຕາມພື້ນຕຳນານ, ຂຸນລໍ, ຜູ້ສ້າງຕັ້ງອານາຈັກຊຽງດົງ-ຊຽງທອງ ( ຢູ່ບ່ອນດຽວກັບຫຼວງພະບາງ ດຽວນີ້ ) ໄດ້ຂັບໄລ່ຂຸນຂ້າຍາງ, ຫົວໜ້າລະວ້າ ທີ່ໄດ້ເຂົ້າມາປົກຄອງເມືອງຊວາ (ບ່ອນດຽວກັນ)

ກ່ອນແລ້ວ. ຊຸມຂ້າຍາງ ໄດ້ໜີໄປທາງທິດຕາເວັນອອກ ແລະໄປຕັ້ງຫຼັກປັກແຫຼ່ງຢູ່ເຂດ ທວ່າງພູນ້ຳທາ. ຢູ່ນີ້ເຂົາໄດ້ສ້າງຕັ້ງອານາຈັກໃໝ່ຂອງຕົນຂຶ້ນ, ເອີ້ນວ່າ " ພູຂ້າ ", ຊຶ່ງແມ່ນວຽງພູຄາ ໃນທຸກມື້ນີ້.

ຕັ້ງແຕ່ໄລຍະເວລານັ້ນມາ ຈົນເຖິງຕອນສ້າງຕັ້ງລາຊະອານາຈັກລ້ານຊ້າງ ໂດຍເຈົ້າຟ້າງຸ່ມ ( 1353 - 1373 / 4 ), ເພິ່ນຮູ້ໜ້ອຍເຕັມທີເຖິງການເປັນມາຂອງເຂດທວ່າງພູນ້ຳທາ. ເຖິງວ່າມີບາງພື້ນແຜ່ນ ເລົ່າຕໍ່ປາກກັນກໍດີ, ແຕ່ກໍບໍ່ເຄີຍມີໜັງສືທາງການ ຫຼື ຂໍ້ບັນທຶກຂີດຂຽນໃດໆ ກ່າວເຖິງປະວັດສາດຂອງມັນເລີຍ.

## <u>ຍຸກສະໄໝລ້ານຊ້າງ ( ແຕ່ສະຕະວັດທີ 14 ເຖິງ 18 ).</u>

ອີງຕາມໜັງສືພື້ນແຜ່ນ ເລື່ອງຂຸນບູລົມ, ໃນໄລຍະ 1354 - 1356 ເຈົ້າຟ້າງຸ່ມ ໄດ້ສ້າງຕັ້ງກຳລັງທັບ ໜຶ່ງຂອງຕົນຂຶ້ນເພື່ອໄປຕີເອົາເຂດທວ່າງພູນ້ຳທາ ພ້ອມດ້ວຍດິນແດນຕອນເໜືອສຸດຂອງລາຊະອານາ ຈັກລ້ານຊ້າງ. ພະອົງໄດ້ເຄື່ອນທັບຈາກເມືອງບຸນເໜືອ ໄປຫາບຸນໃຕ້ ( ໃນແຂວງຜົ້ງສາລີປັດຈຸບັນ ) ລ່ວງເລີຍໄປເຖິງບ້ານດອນມູນ ( ຄືງແມ່ນຫຼວງນ້ຳທາດຽວນີ້ ) ບົນເສັ້ນທາງມຸ່ງໜ້າໄປເມືອງຫຼາ ( ຢູ່ດ້ານໃຕ້ສຸດຂອງແຂວງຢຸນນານ, ຈີນ ). ກະສັດແຫ່ງລາຊະອານາຈັກຊຽງຮຸ່ງ ( ທີ່ເຂດສິບສອງພັນນາ ໃນພາກໃຕ້ຂອງຢຸນນານ ). ໃນເວລານັ້ນ ໄດ້ສະເໜີໃຫ້ຖືເອົາບ້ານປຸ່ງ ( ບາງທີອາດແມ່ນເມືອງສິງ ດຽວນີ້ ) ເປັນຊາຍແດນລະຫວ່າງ ລາຊະອານາຈັກລ້ານຊ້າງ ແລະ ເຂດສິບສອງພັນນາ.

ແຕ່ປີ 1558 ເຖິງ 1587, ຊຶ່ງແມ່ນໄລຍະຮຸ່ງເຮືອງທີ່ສຸດຂອງລາຊະອານາຈັກລ້ານຊ້າງ, ປະວັດສາດຂອງເຂດນີ້ຖືກປົກຄຸມໄປດ້ວຍຄວາມເລິກລັບ.15 ປີຫຼັງຈາກເຈົ້າໄຊເສດຖາທິລາດສິ້ນພະຊົນ(1587), ມີຊາວໄຕຍວນກຸ່ມໜຶ່ງຈາກຊຽງແສນ ( ໝາຍເຖິງຊຽງແສນຂອງໄທປັດຈຸບັນ) ໄດ້ອົບພະຍົບເຂົ້າມາຢູ່ທີ່ທົ່ງຮາບນ້ຳທາ, ອັນເປັນດິນແດນຕອນເໜືອສຸດ ຂອງລາຊະອານາຈັກລ້ານຊ້າງ. ຢູ່ທີ່ນັ້ນ ພວກເຂົາໄດ້ສ້າງຕັ້ງເມືອງຫຼວງຫົວທາຂຶ້ນມາ ( ເມືອງຫຼວງນ້ຳທາ ທຸກມື້ນີ້ ).

41 ປີຕໍ່ມາ, ໃຕ້ອຳນາດລາຊະບັນລັງຂອງເຈົ້າຊີວິດລ້ານຊ້າງ, ພະຍານາແລຕາໄຟ, ເຈົ້າເມືອງງໄຊ (ໃກ້ໆກັບແຂວງອຸດົມໄຊ ປັດຈຸບັນ ) ແລະ ພະຍາສຸດໂທທຳມິກະລາດ, ເຈົ້າເມືອງໆຊຽງແສນ (ໄທ) ໄດ້ຜູກສຳພັນທະມິດນຳກັນ ແລະ ຕົກລົງນຳກັນວ່າ ໃຫ້ຖືເອົາດິນແດນແຫ່ງນີ້ ເປັນຊາຍແດນກັ້ນກາງ ລະຫວ່າງ ລາຊະອານາຈັກລ້ານນາ (ຊຶ່ງສູນກາງຕັ້ງຢູ່ທີ່ຊຽງໃໝ່ ປັດຈຸບັນຂອງໄທ ) ແລະ ລາຊະອານາ ຈັກລ້ານຊ້າງ (ຫຼວງພະບາງ ເປັນສູນກາງ ). ເພື່ອຮັດແໜ້ນສຳພັນທະພາບ, ພະຍາທັງສອງໄດ້ຕົກລົງ ສ້າງພະທາດຂຶ້ນສອງແຫ່ງ. ພະທາດໜຶ່ງສ້າງຂຶ້ນຢູ່ກ້ຳຕາເວັນຕົກຂອງທົ່ງຮາບນ້ຳທາ, ເທິງໂນນພູໃກ້ໆກັບບ້ານນ້ຳແງ້ນ. ທາດນີ້ໃຫ້ຊື່ວ່າ ທາດປຸມປຸກ ໂດຍແມ່ນພະຍານາແລຕາໄຟເປັນຜູ້ສ້າງ. ອີກພະທາດໜຶ່ງ, ເອີ້ນວ່າ ທາດພູຜາສາດ, ຖືກສ້າງຂຶ້ນຢູ່ກ້ຳຕາເວັນອອກຂອງໜ່ວຍພູທີ່ມີຊື່ວ່າ ພູຜາສາດ ໂດຍພະຍາສຸດໂທທຳມິກະລາດ. ໃນທຸກມື້ນີ້ ທາດປຸມປຸກ ຍັງປະຮ່ອງຮອຍເສດເຫຼືອໄວ້ໃຫ້ເຫັນຢູ່. ສ່ວນທາດພູຜາສາດນັ້ນ ໄດ້ຫາຍສາບສູນຈົນບໍ່ເຫຼືອຮ່ອງຮອຍໃດໆໃຫ້ເບິ່ງ.

ໃນຕະຫຼອດ 107 ປີຕໍ່ມາ ນັບວ່າເປັນໄລຍະທີ່ເມືອງຫຼວງຫົວທາ ໄດ້ດຳລົງຄົງຢູ່ໃນສັນຕິພາບ ແລະຄວາມວັດທະນາຖາວອນ.

**ການຍຶດຄອງຂອງຊຽງຮຸ່ງ ( ສູນກາງອຳນາດຂອງແຄວັນສິບສອງພັນນາ, ຢູ່ທາງຕອນໃຕ້ຂອງແຂວງຢຸນນານ, ສປປ.ຈີນ ປັດຈຸບັນ ).**

ໃນທ້າຍສະຕະວັດ 17 ແລະ ຕົ້ນສະຕະວັດທີ18, ລາຊະອານາຈັກລ້ານຊ້າງ ໄດ້ຕົກເຂົ້າສູ່ການຜັນຜວນ ແລະ ສັ່ງສຸດລົງດ້ວຍການຖືກຕັດແຍກອອກເປັນສາມລາຊະອານາຈັກ ທີ່ຂັດແຍ່ງຊິງດີຊິງເດັ່ນກັນ. ກະສັດແຫ່ງຊຽງຮຸ່ງ, ຊຶ່ງພະມະເຫສີເປັນເຈົ້າຍິງຂອງຊຽງແຂງ, ໄດ້ສວຍໂອກາດນີ້ເພື່ອບຸກລຸກບຸກຍຶດເອົາດິນແດນບ້ານເກີດເມືອງນອນຂອງພະນາງ ແລະ ບັນດາອານາເຂດອ້ອມຮອບ, ຕະຫຼອດ ເຖິງເຂດທົ່ງຮາບນ້ຳທາ ຊຶ່ງຮວມມີເມືອງຫຼວງຫົວທາ ແລະ ບັນດາຫົວເມືອງທີ່ຂຶ້ນກັບ. ເຫດການຄັ້ງນັ້ນ ໄດ້ສ້າງຄວາມແຕກຕື່ນເສຍຂວັນເປັນຢ່າງຍິ່ງ - ປະຊາຊົນພາກັນປົບຜ່າຍກັ່ງງ, ທົ່ວເຂດທົ່ງພຽງນ້ຳທາ ຮວມທັງເມືອງຫຼວງຫົວທາ ແລະ ບັນດາຫົວເມືອງທີ່ຂຶ້ນກັບ ໄດ້ກາຍເປັນແຜ່ນດິນຮ້າງຜູ້ຄົນໃນຊົ່ວໄລ ຍະໜຶ່ງ ຈົນມາເຖິງຄາວທີ່ສະພາບການອ່າວໂຍະຍານລົງແລ້ວ ຈຶ່ງມີຜູ້ຄົນເຂົ້າມາຢູ່ອາໄສ. ຊາວໄຕຢວນ ກໍໄດ້ກັບຄືນມາຈາກລ້ານນາ (ເມືອງນ່ານ ຂອງໄທ ດຽວນີ້ ) ແລະ ຈາກເມືອງເງິນ ( ໃນແຂວງ ໄຊຍະບູລີໃນປັດຈຸບັນ ) ຫຼັງຈາກໄດ້ປະຖິ້ມທົ່ງນາຮົ້ວສວນຂອງຕົນໃຫ້ເປັນປ່າເຖິງ 150 ປີ. ແຕ່ຢ່າງ ໃດກໍດີ, ໃນເວລາທີ່ພວກເຂົາໄດ້ພັດພາກຈາກໄປນັ້ນ, ໄດ້ມີເຜົ່າຊົນກຸ່ມຕ່າງໆ ເຊັ່ນ: ຢ້າວ, ແລັນແຕນ, ອາຄ່າ ແລະ ສີດາ - ຈາກເຂດຕ່າງໆຂອງແຄວັນສິບສອງພັນນາ ແລະ ຊຽງຕຸງ (ທີ່ພາກຕາເວັນຕົກຂອງ ພະມ້າປັດຈຸບັນ) ເຂົ້າມາຍຶດຄອງດິນດອນຕອນຫຍ້າແຖບນັ້ນແລ້ວ.

ປີ 1894, ຊາວໄຕຢວນ 5000 ຄອບຄົວ ໄດ້ກັບຄືນສູ່ບ້ານເກີດເມືອງນອນຂອງຕົນ ພາຍໃຕ້ການນຳ ພາຂອງພະຍາຫຼວງກົມມະຊ້າງ (ໝາຍເຖິງ ມະຫາເຈົ້າພະຍາ ຜູ້ມີຊ້າງຫຼາຍ). ພວກເຂົາເຈົ້າໄດ້ສ້າງນະຄອນຫຼວງຂອງຕົນຂຶ້ນມາໃໝ່ ແລະ ພັດທະນາປະເທດ ພາຍໃຕ້ການປົກປ້ອງເຫຼື້ອມງຳຂອງເຈົ້າສັກກະລິນ (1894 - 1903) , ເຈົ້າຊີວິດຂອງລາຊະອານາຈັກຫຼວງພະບາງ.

ໃນປີດຽວກັນ, ຊາວໄຕດຳ (ຍັງເອີ້ນອີກວ່າ ຜູ້ໄຕ) ໄດ້ປົບຜ່າຍຄວາມອົນລະຫົນວຸ້ນວາຍ, ທີ່ສ້າງຂຶ້ນໂດຍພວກປຸ້ນຫົ້ທຸງດຳຈາກຢຸນນານ, ແລະ ອົບພະຍົບເຂົ້າມາຈາກເມືອງແຖ່ງ (ດຽວນີ້ແມ່ນ ດຽນບຽນຟູຫວຽດນາມ). ກຸ່ມໜຶ່ງຂອງພວກໄຕດຳ ເຂົ້າມາຕັ້ງຫຼັກໃນແຂວງຫົວພັນໄລຍະໜຶ່ງ ກ່ອນເຄື່ອນຍ້າຍ ໄປສູ່ເຂດຮ່ອມພູນ້ຳທາ. ອີກກຸ່ມໜຶ່ງໄດ້ເຂົ້າມາຢູ່ທົ່ງພຽງຂອງເມືອງຫຼວງຫົວທາ. ພວກເຂົາເຈົ້າຢູ່ຮ່ວມ ກັນເປັນຫຼາຍໆບ້ານຊຶ່ງຍັງຄົງຕົວຢູ່ຈົນຮອດດຽວນີ້ເຊັ່ນ: ບ້ານປຸ່ງ, ທົ່ງອົ້ມ, ທົ່ງດີ, ທົ່ງຈ້າຍ ແລະ ນ້ຳແງ້ນ.

## ພວກລ່າເມືອງຂຶ້ນຝັ່ງ

ເລີ່ມແຕ່ປີ 1895, ເຂດພາກເໜືອຕອນບົນຂອງລາວ, ຮວມທັງເຂດຮ່ອມພູນ້ຳທາ ແລະ ທົ່ງພຽງເມືອງສິງ, ໄດ້ຕົກເຂົ້າຢູ່ໃຕ້ແອກຂອງລັດທິລ່າເມືອງຂຶ້ນຝັ່ງ ແລະ ຂຶ້ນກັບລາຊະອານາຈັກລ້ານຊ້າງຫຼວງພະບາງ.

ເນື່ອງຈາກເປັນເຂດການປົກຄອງອັນກວ້າງໃຫຍ່, ທ້ອງຖິ່ນນີ້ ຈຶ່ງຖືກປົກຄອງໂດຍພະຍາ ຊຶ່ງໄດ້ແກ່ພະຍາຫຼວງສຸດທິສານ, ຜູ້ຂຶ້ນຊື່ລືຊາໃນທ້ອງຖິ່ນ. ແຕ່ນັ້ນມາໄດ້ມີພະຍາສອງຄົນສືບຕໍ່ກັນຂຶ້ນຄອງອຳນາດ ຈົນເຖິງປີ 1914. ມາຮອດຕອນນັ້ນ, ໄດ້ເກີດຂະບວນລຸກຮືຂຶ້ນຕໍ່ຕ້ານອຳນາດການປົກຄອງຂອງພວກ ລ່າເມືອງຂຶ້ນຝຣັ່ງ ຢູ່ເມືອງສິງ ໂດຍແມ່ນເຈົ້າຟ້າອິງຄຳເປັນຜູ້ນຳພາ. ພວກລ່າເມືອງຂຶ້ນຝຣັ່ງສາມາດປາບປາມດັບມອດຂະບວນລຸກຮືໃນທ້ອງຖິ່ນໄດ້ ແລະ ຈາກນັ້ນໄດ້ຫຼຸບຍອບສະຖານະພາບການເມືອງຂອງເມືອງຫຼວງທົ່ວທາ ໃຫ້ລົງສູ່ຂັ້ນເປັນເມືອງທຳມະດາສາມັນເທົ່ານັ້ນ. ພວກເຂົາໄດ້ປ່ຽນຕຳແໜ່ງ ພະຍາໃນເມື່ອກ່ອນ ດ້ວຍທົວໜ້າກິ່ງເມືອງນ້ຳທາ,ຊຶ່ງເປັນບຸກຄົນໄວ້ເນື້ອເຊື່ອໃຈ ແລະ ຖືກແຕ່ງຕັ້ງຂຶ້ນໂດຍພວກເຂົາເອງ.

## ການປ່ຽນຊື່ ເມືອງຫຼວງທົ່ວທາ

ໃນວັນທີ 8 ກໍລະກົດ 1947, ອີງຕາມອຳນາດຂອງພະລາຊະບັນຍັດ ສະບັບເລກທີ 141 ຂອງເຈົ້າຊີວິດ ສີສະຫວ່າງວົງ, ເຈົ້າຊີວິດແຫ່ງລາຊະອານາຈັກລາວ, ກິ່ງເມືອງຫຼວງທົ່ວທາ ໄດ້ຖືກປ່ຽນຊື່ມາເປັນເມືອງຫຼວງນ້ຳທາ ຕັ້ງແຕ່ນັ້ນມາ. ໃນເວລາດຽວກັນ ກໍຖືກຍົກຂຶ້ນເປັນເມືອງເອກຂອງແຂວງຫົວຂອງ.

ມາຮອດວັນທີ 17 ພຶດສະພາ 1962, ແຂວງຫົວຂອງ ໄດ້ຮັບການປົດປ່ອຍ ແລະ ຢູ່ໃຕ້ການປົກຄອງ ຂອງແນວລາວຮັກຊາດ ( ຊຶ່ງແມ່ນການຈັດຕັ້ງແນວໂຮມຂອງພັກປະຊາຊົນ ປະຕິວັດລາວ ). ອຳນາດ ການປົກຄອງຂອງລະບອບເກົ່າ ໄດ້ຖືກລົບລ້າງ ແລະ ພວກເຈົ້າຂຸນມູນນາຍຂອງລະບອບເກົ່າ ໄດ້ປົບ ໜີໄປທາງຫ້ວຍຊາຍ ຢູ່ກໍ້າຕາເວັນຕົກ.

ຫຼັງຈາກການປົດປ່ອຍທົ່ວປະເທດ, ດິນແດນແຂວງຫົວຂອງໃນເມື່ອກ່ອນ ໄດ້ຖືກແບ່ງອອກເປັນສອງແຂວງ ຄື : ແຂວງບໍ່ແກ້ວ ແລະ ແຂວງຫຼວງນ້ຳທາ ໃນປັດຈຸບັນ.

ສາໄດ້ຄົ້ນຄວ້າຂຽນຂຶ້ນມານັ້ນ ເຂົ້າໃສ່ໃນທັ້ນ. ໃຫ້ແຕ້ມໝາຍບອກປະວັດການຍົກຍ້າຍບ້ານ ຂອງ ແຕ່ລະບ້ານ. ບັດແລ້ວ, ຈຶ່ງທຳການປຽບທຽບປະວັດການຍ້າຍບ້ານຂອງບ້ານນີ້ກັບບ້ານອື່ນ ໃຫ້ທົ່ວເຖິງ ຖີ່ຖ້ວນ. ແລ້ວໆບອກເບິ່ງດູວ່າ ທ່ານສາມາດຮຽນຮູ້ໄດ້ສິ່ງໃໝ່ໆ ຫຍັງແດ່ ກ່ຽວກັບບັນດາບ້ານໃນທ້ອງ ຖິ່ນນັ້ນ ?

## ບັນດາເອກະສານອ້າງອີງ ແລະ ແນະນຳໃຫ້ອ່ານ

ພະໄຊຍະມົງຄຸນ. ສ. 2001 “ *ປະວັດສາດເມືອງສິງ, ຫຼວງນ້ຳທາ, ສປປ.ລາວ* “. UNESCO - ໂຄງການທ່ອງທ່ຽວທຳມະຊາດ ນ້ຳທ້າ, ລາວ.